ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສາທາລະນະສຸກ

ເລກທີ 3789 /ສທ

ນະຄອນຫຼວງວຽງຈັນ, ວັນທີ 28 DEC 2022

# ຂໍ້ຕົກລົງ
# ວ່າດ້ວຍການຄຸ້ມຄອງ ພືດປໍ່ແກ້ວ ນຳໃຊ້ ທາງການແພດ ແລະ ເປັນສິນຄ້າ

- ອີງຕາມ ກົດໝາຍ ວ່າດ້ວຍຢາ ແລະ ຜະລິດຕະພັນການແພດ ສະບັບເລກທີ 07/ສພຊ, ລົງວັນທີ 21 ທັນວາ 2011;
- ອີງຕາມ ກົດໝາຍ ວ່າດວ້ຍອາຫານ ສະບັບປັບປຸງ ເລກທີ 33/ສພຊ, ລົງວັນທີ 24 ກໍລະກົດ 2013;
- ອີງຕາມ ກົດໝາຍ ວ່າດ້ວຍຢາເສບຕິດ ສະບັບເລກທີ 10/ສພຊ, ລົງວັນທີ 25 ທັນວາ 2007;
- ອີງຕາມ ແຈ້ງການ ຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 48/ຫສນຍ, ລົງວັນທີ 14 ມັງກອນ 2022.

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ, ມາດຕະການ ກ່ຽວກັບ ການຄຸ້ມຄອງກິດຈະການ ກ່ຽວກັບພືດປໍ່ແກ້ວ ທີ່ນຳໃຊ້ທາງການແພດ ແລະ ເປັນສິນຄ້າ ເພື່ອເຮັດໃຫ້ການດຳເນີນກິດຈະການດັ່ງກ່າວ ຖືກຕ້ອງ ແລະ ສອດຄ່ອງຕາມລະບຽບຫຼັກການຄຸ້ມຄອງພາຍໃນ ພາກພື້ນ ແລະ ສາກົນ.

**ມາດຕາ 2 ການຄຸ້ມຄອງ ພືດປໍ່ແກ້ວ ທາງການແພດ ແລະ ເປັນສິນຄ້າ**

ແມ່ນ ການຄົ້ນຄວ້າ, ພິຈາລະນາ, ອະນຸຍາດ, ຕິດຕາມ ກວດກາ, ປະເມີນຜົນ ແລະ ລາຍງານ ກິດຈະການ ກ່ຽວກັບພືດປໍ່ແກ້ວ ໃນການປູກ, ຖອດຮິດ, ຜະລິດ ປຸງແຕ່ງ, ນຳເຂົ້າ, ສົ່ງອອກ, ຂົນສົ່ງ, ຈຳໜ່າຍ, ເກັບຮັກສາ , ຄົ້ນຄ້ວາວິໄຈທາງດ້ານວິທະຍາສາດ.

**ມາດຕາ 3 ອະທິບາຍຄຳສັບ**

ຄຳສັບທີ່ໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ພືດປໍ່ແກ້ວ (Hemp)** ໝາຍເຖິງ ພືດທີ່ຢູ່ໃນຕະກູນດຽວກັນກັບກັນຊາ ແລະ ມີຊື່ວິທະຍາສາດວ່າ Cannabis sativa L. (Cannabis sativa L. subsp. sativa var. sativa) ຊຶ່ງເປັນຊະນິດຍ່ອຍຂອງ ຕົ້ນກັນຊາ (Cannabis sativa L.);

2. **ແກ່ນພັນທີ່ຖືກຮັບຮອງ** ໝາຍເຖິງ ແກ່ນພັນທີ່ໄດ້ຮັບການຂຶ້ນທະບຽນຕາມລະບຽບການທີ່ກ່ຽວຂ້ອງ ແລະ ໄດ້ຮັບອະນຸຍາດຈາກແຫຼ່ງທີ່ມາຖືກຕ້ອງ ໂດຍຜ່ານການກວດກາວິໄຈ ປະລິມານ ເດວຕ້າ-9 ເຕຕຣາຮີໂດຣ

ການາບີໂນນ (Δ9-tetrahydrocannabinol,THC) ບໍ່ເກີນ 1% ຕໍ່ ນໍ້າໜັກພືດແຫ້ງ ແລະ ຮັບຮອງ ຈາກ ກະຊວງສາທາລະນະສຸກ;

**3. ຜະລິດຕະພັນການແພດ** ໝາຍເຖິງ ວັດຖຸ ຫຼື ທາດໃດໜຶ່ງ ທີ່ມີການນຳໃຊ້ເຂົ້າໃນວົງການແພດ ລວມທັງຜະລິດຕະພັນໃດໜຶ່ງທີ່ນຳໃຊ້ທົ່ວໄປໃນສັງຄົມເຊັ່ນ: ອຸປະກອນການແພດ, ຜະລິດຕະພັນເສີມສຸຂະພາບ, ເຄື່ອງສຳອາງ, ເຄມີຄວບຄຸມ ແລະ ເຄມີອັນຕະລາຍທີ່ໃຊ້ໃນຄົວເຮືອນ;

**4. ນຳໃຊ້ທາງການແພດ** ໝາຍເຖິງ ການນຳໃຊ້ທຸກສ່ວນຂອງພືດປໍ່ແກ້ວ ທີ່ມີປະລິມານສານ ແຄນນາບີດີໂອນ(Cannabidiol,CBD) ເປັນຕົວຢາຫຼັກທີ່ນຳໃຊ້ເຂົ້າໃນທາງການແພດແລະມີສານ (Δ9-tetrahydro cannabinol,THC) ທີ່ມີລິດໃນການອອກລິດຕໍ່ຈິດ ແລະ ປະສາດ ແລະ ເປັນສານທີ່ນອນຢູ່ໃນບັນຊີປະເພດ II ຂອງ ສົນທິສັນຍາສາກົນວ່າດ້ວຍຢາເສບຕິດ, ແຕ່ໃຫ້ນຳໃຊ້ສານ THC ໃນທາງການແພດ ບໍ່ເກີນ 1% ຕໍ່ນໍ້າໜັກພືດແຫ້ງ ແລະ ບໍ່ເກີນ 0,2% ໃນຜະລິດຕະພັນທີ່ເປັນວັດຖຸດິບ ຫຼື ຜະລິດຕະພັນສຳເລັດຮູບທີ່ປຸງແຕ່ງມາຈາກສ່ວນປະກອບຂອງພືດປໍ່ແກ້ວ ໂດຍຜ່ານການກວດກາວິໄຈຕາມຫຼັກການ ແລະ ວິທີການທາງວິທະຍາສາດ ທີ່ ກະຊວງສາທາລະນະສຸກ ຮັບຮອງ;

**5. ນຳໃຊ້ເປັນສິນຄ້າ** ໝາຍເຖິງ ສິນຄ້າຈາກພືດປໍ່ແກ້ວ ວັດຖຸດິບ ຫຼື ຜະລິດຕະພັນສຳເລັດຮູບ ແລະ ເຄິ່ງສຳເລັດຮູບທີ່ຜະລິດ, ປຸງແຕ່ງ ຈາກພືດປໍ່ແກ້ວ ເພື່ອນຳໃຊ້ເປັນສິນຄ້າ ຫຼື ບໍລິໂພກ ໃນຂົງເຂດສາທາລະນະສຸກຄຸ້ມຄອງ ທີ່ມີປະລິມານສານ THC ບໍ່ເກີນ 1% ຕໍ່ນໍ້າໜັກພືດແຫ້ງ ຫຼື ເປັນຜະລິດຕະພັນທີ່ນຳໃຊ້ໃນຂົງເຂດສາທາລະນະສຸກ ເຊັ່ນ: ພືດແຫ້ງ (ວັດຖຸດິບ), ນໍ້າມັນ, ສານຖອດຣິດ, ກາວ, ສານລະລາຍເຫຼົ້າ (Tinctures) ທີ່ໄດ້ຈາກພືດປໍ່ແກ້ວ ໂດຍ ກຳນົດ ໃຫ້ມີ ສານ THC ບໍ່ເກີນ 0,2 %;

**6. ການປູກ** ໝາຍເຖິງ ການນຳໃຊ້ແກ່ນພັນ ປູກໃນເຂດສຳປະທານ ໃນຮົ່ມ ຫຼື ກາງແຈ້ງ (ລະບົບປິດ) ໂດຍການນຳໃຊ້ເຕັກນິກວິຊາການຄວບຄຸມສະເພາະໃນການປູກ ເພື່ອໃຫ້ໄດ້ຮັບຜົນຜະລິດທີ່ມີຄຸນນະພາບ ແລະ ສອດຄ່ອງຕາມລະບຽບຫຼັກການທີ່ທາງການກຳນົດອອກ;

**7. ລະບົບປິດ** ໝາຍເຖິງ ການສ້າງສິ່ງກັ້ນບັງບໍລິເວນປູກ ເພື່ອສ້າງເງື່ອນໄຂໃນການປູກ ທີ່ມີການຈຳກັດການເຂົ້າ-ອອກ ຂອງບຸກຄົນ ທີ່ບໍ່ມີສ່ວນກ່ຽວຂ້ອງກັບກິດຈະການ ແລະ ເປັນການຄວບຄຸມການກໍ່ຄວາມເສຍຫາຍແກ່ຜົນລະປູກ ແລະ ເປັນການຄວບຄຸມ ຕາມລະບົບຄຸ້ມຄອງທີ່ທາງການກຳນົດ;

**8. ການຖອດຣິດ** ໝາຍເຖິງ ການແຍກເອົາທາດທີ່ເປັນຢາ ອອກຈາກພືດຕົ້ນໄມ້ເປັນຢາ, ການນຳເອົາວັດຖຸດິບຈາກພືດ ຈາກທຳມະຊາດ ຫຼື ຈາກການປູກ-ລ້ຽງຂຶ້ນ ປະສົມໃສ່ສານລະລາຍ ໂດຍມີວິທີການປະຕິບັດຕາມມາດຕະຖານ ເພື່ອແຍກເອົາທາດທີ່ມີລິດທາງການແພດ;

**9. ການຜະລິດ, ປຸງແຕ່ງ** ໝາຍເຖິງ ຂະບວນການແປຮູບ ຈາກສ່ວນຕ່າງໆ ຂອງພືດແຫ້ງປໍ່ແກ້ວເຊັ່ນ: ແກ່ນ, ຕາ, ດອກ,ຍອດໃບມີຊໍ່ດອກ ແລະ ພາກສ່ວນໃຊ້ອື່ນໆ ເພື່ອໃຫ້ກາຍເປັນຜະລິດຕະພັນຮູບແບບຕ່າງໆ ຕາມທີ່ຕ້ອງການ;

**10. ການນຳເຂົ້າ-ສົ່ງອອກແກ່ນພັນພືດ** ໝາຍເຖິງ ການອະນຸຍາດນຳເຂົ້າ-ສົ່ງອອກ ສະເພາະ ແກ່ນພັນພືດປໍ່ແກ້ວ ພາຍຫຼັງທີ່ໄດ້ຮັບອະນຸຍາດດຳເນີນກິດຈະການ ການປູກ ເພື່ອນຳໃຊ້ທາງການແພດ ແລະ ເປັນສິນຄ້າ;

**11. ການສົ່ງອອກ** ໝາຍເຖິງການດຳເນີນອະນຸຍາດສົ່ງອອກຜະລິດຕະພັນຈາກພືດປໍ່ແກ້ວ ແລະ ປະຕິບັດການສົ່ງອອກໄປຕາມກົດລະບຽບຂອງປະເທດປາຍທາງ ແລະ ກົດໝາຍສາກົນ;

**12. ການຂົນສົ່ງ** ໝາຍເຖິງການເຄື່ອນຍ້າຍພາຍໃນ ຈາກ ທີ່ຕັ້ງໜຶ່ງໄປ ທີ່ຕັ້ງໜຶ່ງ ຂອງສະຖານທີ່ ທີ່ໄດ້ຮັບອະນຸຍາດຈາກກະຊວງສາທາລະນະສຸກ;

**13. ການຈຳໜ່າຍ** ໝາຍເຖິງ ການຂາຍ, ຈ່າຍ, ແຈກຢາຍ, ແລກປ່ຽນ ເພື່ອຜົນປະໂຫຍດທາງດ້ານການຄ້າ;

**14. ການເກັບຮັກສາ** ໝາຍເຖິງການເກັບຮັກສາ ພືດປໍ່ແກ້ວ ແລະ ຜະລິດຕະພັນຈາກພືດປໍ່ແກ້ວ ຢູ່ສະຖານທີ່ໃດໜຶ່ງ ທີ່ໄດ້ຮັບອະນຸຍາດ ຈາກ ກະຊວງສາທາລະນະສຸກ;

**15. ການຢັ້ງຢືນຜົນການວິໃຈ** ໝາຍເຖິງການຮັບຮອງ ແລະ ຢັ້ງຢືນຜົນຂອງການວິໃຈ ທາງດ້ານປະລິມານ ແລະ ຄຸນນະພາບຂອງ ສານ THC ແລະ ສານ CBD ຕາມຫຼັກການ ແລະ ວິທີການວິທະຍາສາດ ຈາກ ຫ້ອງວິໃຈທີ່ໄດ້ຮັບອະນຸຍາດ;

**16. ຫ້ອງກວດກາວິໃຈ** ໝາຍເຖິງ ສະຖານທີ່ທົດລອງທີ່ໄດ້ຮັບອະນຸຍາດຈາກກະຊວງສາທາລະນະສຸກໃຫ້ກວດ ກາວິໃຈຫາສານ THC, CBD ແລະ ສານອື່ນໆ ຕາມຫຼັກວິຊາການ ແລະ ວິທີການວິທະຍາສາດ.

**17. ຄຸນນະພາບຂອງຜະລິດຕະພັນຈາກພືດປໍ່ແກ້ວ** ໝາຍເຖິງ ການບັນລຸຕາມມາດຕະຖານທີ່ໄດ້ກຳນົດໄວ້ເພື່ອໃຊ້ປະ ໂຫຍດທາງດ້ານການແພດ ໂດຍຜ່ານການກວດກາວິໃຈ ທາງດ້ານປະລິມານ ແລະ ຄຸນນະພາບ, ຄວາມເຂັ້ມຂຸ້ນ (Potency), ສານປາບສັດຕູພືດ (Pesticides), ການປົນເປື້ອນຈຸລິນຊີວິທະຍາ (Micro biological), ໂລຫະໜັກ (heavy metals) ແລະ ສານລະລາຍທີ່ຕົກຄ້າງ (residuals soventes) ຂອງສານ THC, CBD ຕາມຫຼັກການ ແລະ ວິທະຍາສາດ ຂອງ ກະຊວງສາທາລະນະສຸກ ໄດ້ກຳນົດ.

**18. ການຄົ້ນຄວ້າວິໃຈ** ໝາຍເຖິງ ການສຶກສາ, ຄົ້ນຄ້ວາ ແລະ ວິໃຈກ່ຽວກັບຄຸນນະພາບ, ປະສິດທິພາບ, ປະສິດທິຜົນ ແລະ ຄວາມປອດໄພ ລວມທັງການສຶກສາຄົ້ນຄ້ວາແນວພັນພືດ ເພື່ອ ພັດທະນາເປັນຜະລິດຕະພັນສຳເລັດຮູບ.

**19. ໜັງສືອະນຸຍາດ** ໝາຍເຖິງ ເອກະສານ ໄດ້ຮັບຮອງເປັນທາງການ ສະເພາະ ການປູກ, ຖອດຮິດ, ຜະລິດ, ປຸງແຕ່ງ, ນຳເຂົ້າ-ສົ່ງອອກ, ຂົນສົ່ງ, ສົ່ງຜ່ານ,ຈຳໜ່າຍ, ເກັບຮັກສາ ຫຼື ມີຄອບຄອງ, ຄົ້ນຄ້ວາວິໃຈທາງດ້ານວິທະຍາສາດ.

**20. ການລາຍງານຕໍ່ອົງການຄວບຄຸມຢາເສບຕິດສາກົນ** ໝາຍເຖິງ ການລາຍງານຂອງ ກະຊວງສາທາລະນະສຸກ ຕໍ່ ຄະນະກຳມະການຄວບຄຸມຢາເສບຕິດ ແລະ ອາດຊະຍະກຳສາກົນ (INCB) ກ່ຽວກັບການປູກ, ຖອດຮິດ, ຜະລິດ ປຸງແຕ່ງ, ນຳເຂົ້າ-ສົ່ງອອກຈຳໜ່າຍ, ເກັບຮັກສາ ຫຼື ມີຄອບຄອງ, ຄົ້ນຄ້ວາ, ທົດລອງ ແລະ ວິໃຈທາງດ້ານວິທະຍາສາດ ຕາມລະບຽບການ.

**21. ການລາຍງານຂອງຜູ້ປະກອບການ** ໝາຍເຖິງ ການລາຍງານ ຕໍ່ກົມອາຫານ ແລະ ຢາ, ກະຊວງສາທາລະນະສຸກ ກ່ຽວກັບການປູກ, ຖອດຮິດ, ຜະລິດ, ປຸງແຕ່ງ, ນຳເຂົ້າ-ສົ່ງອອກ, ຂົນສົ່ງ, ຈຳໜ່າຍ, ເກັບຮັກສາ ຫຼື ມີຄອບຄອງ, ຄົ້ນຄ້ວາ, ທົດລອງ ແລະ ວິໃຈທາງດ້ານວິທະຍາສາດ ຕາມລະບຽບການ ຂອງ ກະຊວງສາທາລະນະສຸກ.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ມີຂອບເຂດການນຳໃຊ້ສຳລັບ ວິສາຫະກິດ ແລະ ການຈັດຕັ້ງທີ່ຄຸ້ມຄອງດຳເນີນກິດຈະການ ການປູກ, ຖອດຮິດ, ຜະລິດ, ປຸງແຕ່ງ, ນຳເຂົ້າ-ສົ່ງອອກ, ຂົນສົ່ງ, ຈຳໜ່າຍ, ເກັບຮັກສາ ຫຼື ມີຄອບຄອງ, ຄົ້ນຄ້ວາວິໃຈທາງດ້ານວິທະຍາສາດ ຈາກພືດປໍ່ແກ້ວ ເພື່ອນຳໃຊ້ໃນທາງການແພດ ແລະ ເປັນສິນຄ້າ.

## ໝວດທີ 2
## ປະເພດ, ເງື່ອນໄຂການຂໍອະນຸຍາດດຳເນີນກິດຈະການ

**ມາດຕາ 5 ປະເພດກິດຈະການ**

ປະເພດກິດຈະການກ່ຽວກັບພືດປໍ່ແກ້ວເພື່ອນຳໃຊ້ໃນທາງການແພດ ແລະ ເປັນສິນຄ້າ ມີ 05 ປະເພດ:

1. ການປູກ;

2. ຖອດຣິດ, ຜະລິດ, ປຸງແຕ່ງ;

3. ເກັບຮັກສາ;

4. ຈຳໜ່າຍ ແລະ ນຳໃຊ້;

5. ນຳເຂົ້າ-ສົ່ງອອກ, ຂົນສົ່ງ.

ເຊິ່ງກິດຈະການເຫຼົ່ານີ້ ຕ້ອງໄດ້ຮັບການອະນຸມັດຈາກກົມສົ່ງເສີມການລົງທຶນ, ກະຊວງແຜນການ ແລະ ການລົງທຶນ ຕາມລະບຽບການລົງທຶນ ແລະ ໄດ້ຮັບອະນຸຍາດທາງດ້ານວິຊາການ ຈາກ ກະຊວງສາທາລະນະສຸກ.

**ມາດຕາ 6 ເງື່ອນໄຂການຂໍອະນຸຍາດດຳເນີນກິດຈະການ**

ການຂໍອະນຸຍາດດຳເນີນກິດຈະການກ່ຽວກັບພືດປໍ່ແກ້ວ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ຕ້ອງເປັນວິສາຫະກິດທີ່ໄດ້ອະນຸຍາດການລົງທຶນ ຈາກ ກະຊວງແຜນການ ແລະ ການລົງທຶນ ຫຼື ຄະນະຮັບ ຜິດຊອບກ່ຽວຂ້ອງທີ່ໄດ້ຮັບການມອບໝາຍຈາກລັດຖະບານ;

2. ຕ້ອງມີອະນຸຍາດທະບຽນວິຊາການ ຈາກ ກະຊວງສາທາລະນະສຸກ;

3. ຕ້ອງມີເງື່ອນໄຂດ້ານສະຖານທີ່ ຫຼື ພື້ນທີ່ອຳນວຍຄວາມສະດວກຕາມທາງການໄດ້ກຳນົດໃຫ້;

4. ຕ້ອງມີແຜນມາດຕະການ, ແຜນແມ່ບົດ ແລະ ຄູ່ມືການປະຕິບັດງານທຸກຂັ້ນຕອນທີ່ກ່ຽວຂ້ອງ;

5. ຕ້ອງມີເງື່ອນໄຂໃນການວິໄຈເພື່ອຄຸ້ມຄອງ ສານ THC ທີ່ໄດ້ກຳນົດ ຫຼື ໄດ້ຮັບການຢັ້ງຢືນ ຈາກ ກະຊວງສາທາລະນະສຸກ;

**ມາດຕາ 7 ເງື່ອນໄຂການຂໍອະນຸຍາດທະບຽນວິຊາການ**

ວິສາຫະກິດ ທີ່ມີຈຸດປະສົງດຳເນີນກິດຈະການກ່ຽວກັບພືດປໍ່ແກ້ວ ຕ້ອງຂໍອະນຸຍາດທະບຽນວິຊາການຕາມເງື່ອນ ໄຂດັ່ງລຸ່ມນີ້:

1. ເປັນເພສັດຊະກອນ ຫຼື ນັກເຄມີສາດ ທີ່ເປັນຄົນສັນຊາດລາວ ທີ່ມີໃບປະກາດສະນີຍາບັດປະລິນຍາຕີ ທີ່ອອກໃຫ້ໂດຍສະຖາບັນການສຶກສາທີ່ກ່ຽວຂ້ອງ ແລະ ຕ້ອງມີປະສົບການຮັບໃຊ້ວຽກງານ ເພສັດຊະກຳ 05 ປີ, ຂຶ້ນໄປໂດຍມີໃບຢັ້ງຢືນຮັບໃຊ້ວິຊາສະເພາະຈາກພາກສ່ວນທີ່ກ່ຽວຂ້ອງ;

2. ສຳລັບຢັ້ງຢືນການຮັບໃຊ້ວິຊາສະເພາະ ກ່ຽວຂ້ອງ ຖ້າແມ່ນພະນັກງານທີ່ໄດ້ສັງກັດລັດ ແມ່ນອົງການຈັດຕັ້ງລັດກ່ຽວ ຂ້ອງເປັນຜູ້ຢັ້ງຢືນ, ໃນກໍລະນີຜ່ານການຮັບໃຊ້ວິຊາສະເພາະໃນພາກເອກະຊົນນອກຈາກຢັ້ງຢືນຈາກພາກສ່ວນກ່ຽວຂ້ອງແລ້ວຍັງຕ້ອງຜ່ານການຢັ້ງຢືນຮັບຮູ້ຈາກພາກລັດທີ່ເປັນອົງການຄຸ້ມຄອງກ່ຽວຂ້ອງຂັ້ນແຂວງ, ນະຄອນຫຼວງຕື່ມອີກ.

3. ມີທີ່ຢູ່ໃນປະເທດ ສ ປ ປ ລາວ;

4. ມີເງື່ອນໄຂ ປະຈຳການຢູ່ສະຖານທີ່ຂໍອະນຸຍາດ, ໃນກໍລະນີ ບໍ່ມີເງື່ອນໄຂ ປະຈຳການຢູ່ສະຖານທີ່ໄດ້ຮັບອະນຸຍາດຕ້ອງແຈ້ງແຜນປະຕິບັດງານ ຂອງການເຄື່ອນໄຫວຢ່າງເປັນລາຍລັກອັກສອນ ເປັນແຕ່ລະໄລຍະ;

5. ມີສຸຂະພາບດີ, ບໍ່ເປັນໂລກຈິດ ຫຼື ພະຍາດຕິດແປດ, ບໍ່ເສບຢາເສບຕິດ;

6. ບໍ່ຢູ່ໃນໄລຍະດຳເນີນຄະດີ ຫຼື ຖືກປະຕິບັດວິໄນຍ້ອນການຜິດພາດທາງດ້ານວິຊາຊີບ ເພສັດຊະກຳ ຫຼື ຄ້າຂາຍຢາເສບຕິດໃຫ້ໂທດ ຫຼື ຍ້ອນການກະທຳຜິດໃດໜຶ່ງໂດຍເຈດຕະນາ.

**ມາດຕາ 8 ເງື່ອນໄຂການອະນຸຍາດປູກ**

ວິສາຫະກິດ ທີ່ຂໍອະນຸຍາດປູກພືດປໍ່ແກ້ວ ນຳໃຊ້ໃນທາງການແພດ ແລະ ເປັນສິນຄ້າ ແມ່ນໃຫ້ປະຕິບັດຕາມເງື່ອນໄຂການຂໍອະນຸຍາດທະບຽນວິຊາການ ຕາມທີ່ລະບຸໄວ້ໃນ ມາດຕາ 7 ຂອງຂໍ້ຕົກລົງສະບັບນີ້ ແລະ ໃຫ້ປະຕິບັດຕາມເງື່ອນໄຂສະເພາະດັ່ງນີ້:

1. ຕ້ອງມີບົດວິພາກ ດ້ານເຕັກນິກວິຊາການໃຫ້ສອດຄ່ອງຕາມເງື່ອນໄຂທີ່ກຳນົດໄວ້;

2. ເນື້ອທີ່ສຳປະທານປູກຜືດປໍ່ແກ້ວ ແມ່ນອະນຸຍາດບໍ່ເກີນ 100 (ໜຶ່ງຮ້ອຍ) ເຮັກຕາ ຕໍ່ ໃບອະນຸຍາດ;

3. ໃນກໍລະນີປູກຢູ່ຫຼາຍຈຸດໃຫ້ລະບຸເຂດທີ່ຕັ້ງລະອຽດ ເພື່ອເປັນຫຼັກຖານໃຫ້ແກ່ການຄຸ້ມຄອງ ແລະ ຫຼີກລ້ຽງການອອກອະນຸຍາດສະຖານທີ່ຊ້ຳຊ້ອນກັນ;

4. ກຳນົດສະຖານທີ່ປູກ ພ້ອມລະບຸ ເຂດສຳປະທານ ພ້ອມເສັ້ນຂະໜານ ແລະ ເສັ້ນແວງ ທີ່ສາມາດກວດສອບໄດ້ ເພື່ອຫຼີກລ້ຽງ ການອະນຸຍາດຊ້ຳຊ້ອນ;

5. ກຳນົດຮູບແບບການເພາະປູກ ແບບກາງແຈ້ງ ຫຼື ແບບໃນຮົ່ມ (ແບບປິດ) ພ້ອມທັງເຕັກນິກວິຊາການຂອງການປູກຜືດປໍ່ແກ້ວ ເພື່ອນຳໃຊ້ໃນທາງການແພດ;

6. ແກ່ນພັນທີ່ຈະນຳມາປູກ ຕ້ອງໄດ້ຮັບການຂຶ້ນທະບຽນຕາມລະບຽບການທີ່ກ່ຽວຂ້ອງ ແລະ ຮັບຮອງຈາກ ກະຊວງສາທາລະນະສຸກ;

7. ການຂໍອະນຸຍາດນຳເຂົ້າແກ່ນພັນ ແມ່ນຈະພິຈາລະນາຕາມການສະເໜີ ໂດຍ ອີງໃສ່ການຄິດໄລ່ 1 ເຮັກຕາ ຕໍ່ ແກ່ນພັນຜືດ ຈຳນວນສະເລ່ຍ 52.000 ແກ່ນ ຫຼື 2,2 ກິໂລກຼາມ ຕໍ່ຈຳນວນ ເຮັກຕາ ຂອງ ສະຖານທີ່ປູກ ທີ່ໄດ້ກະກຽມຄວາມພ້ອມ;

8. ມີລະບົບທີ່ສາມາດຄຸ້ມຄອງ, ຄວບຄຸມ ການເຄື່ອນໄຫວ ທີ່ປອດໄພ ດ້ວຍຫຼາຍວິທີການ ເຊັ່ນ: ກ້ອງວົງຈອນປິດ ຫຼື ວິທີການອື່ນໆ ເພື່ອປ້ອງກັນການເຂົ້າເຖິງ ຂອງບຸກຄົນທີ່ບໍ່ກ່ຽວຂ້ອງ;

9. ການເກັບຮັກສາ ຕ້ອງມີຫ້ອງທີ່ປອດໄພ, ແໜ້ນໜາ ທີ່ສາມາດເກັບຮັກສາ ແກ່ນ/ໃບ/ຊໍ່ດອກ ແລະ ການກຳຈັດສິ່ງເສດເຫຼືອ/ ຂີ້ເຫຍື້ອ) ຫຼັງຈາກເກັບກ່ຽວ;

10. ຕ້ອງມີລະບົບການຄວບຄຸມ ໂດຍອີງໃສ່ ຫຼັກການການປະຕິບັດການປູກທີ່ດີ ສຳລັບຜືດເປັນຢາ ທີ່ຈະນຳໃຊ້ໃນການປູກຜືດປໍ່ແກ້ວທາງການແພດ, ມີຂັ້ນຕອນການປະຕິບັດທີ່ເປັນມາດຕະຖານການວິເຄາະ, ການເກັບກ່ຽວ, ການຂົນສົ່ງ ແລະ ລະບົບການລາຍງານ.

**ມາດຕາ 9 ເງື່ອນໄຂການອະນຸຍາດຖອດຮີດ, ຜະລິດ, ປຸງແຕ່ງ**

ວິສາຫະກິດ ທີ່ຂໍອະນຸຍາດ ຖອດຮີດ, ຜະລິດ, ປຸງແຕ່ງ ຜືດປໍ່ແກ້ວ ນຳໃຊ້ໃນທາງການແພດ ແມ່ນໃຫ້ປະຕິບັດ ຕາມເງື່ອນໄຂ ທີ່ລະບຸໄວ້ໃນ ມາດຕາ 7 ນອກຈາກນັ້ນ ຕ້ອງປະຕິບັດຕາມເງື່ອນໄຂສະເພາະດັ່ງນີ້:

1. ຕ້ອງມີບົດວິພາກ ດ້ານເຕັກນິກວິຊາການໃຫ້ສອດຄ່ອງຕາມເງື່ອນໄຂທີ່ກຳນົດໄວ້;

2. ມີອາຄານ, ສະຖານທີ່, ອຸປະກອນ, ສິ່ງອຳນວຍຄວາມສະດວກ ສຳລັບການດຳເນີນການຖອດຮີດ, ຜະລິດ, ປຸງແຕ່ງ ແລະ ກວດກາວິໄຈ ເພື່ອຕິດຕາມຜະລິດຕະພັນ ຕາມຫຼັກການ ທີ່ ກະຊວງສາທາລະນະສຸກ ວາງອອກ;

3. ມີສະຖານທີ່ ຢ່າງເໝາະສົມ ແລະ ປອດໄພ ໃນການເກັບຮັກສາ ເພື່ອປ້ອງກັນການສູນຫາຍ ຫຼື ຖືກທຳລາຍ, ການເກັບຮັກສາໃຫ້ແຍກເປັນສັດສ່ວນ ແລະ ບໍ່ໃຫ້ປົນກັບວັດຖຸອື່ນໆ;

4. ມີປ້າຍພື້ນສີຂຽວ ທີ່ເຮັດດ້ວຍວັດຖຸທີ່ຖາວອນ ຢ່າງໜ້ອຍ ມີຂະໜາດກວ້າງ ຫ້າສິບ ຊັງຕີແມັດ, ຍາວໜຶ່ງຮ້ອຍ ຊັງຕີແມັດ ແລະ ມີຕົວໜັງສືພາສາລາວ ສີຂາວ ທີ່ມີຂະໜາດຄວາມສູງຢ່າງໜ້ອຍ 5 (ຫ້າ) ຊັງຕີແມັດ, ຖ້າມີພາສາສາກົນ ຕ້ອງມີຂະໜາດນ້ອຍກວ່າ ແລະ ຢູ່ດ້ານລຸ່ມຂອງພາສາລາວ ເຊິ່ງສະແດງໃຫ້ເຫັນຈຸດປະສົງຂອງການຖອດຮີດ ເຊັ່ນ: "ສະຖານທີ່ເຮັດການຖອດຮີດ ເພື່ອໃຊ້ປະໂຫຍດທາງການແພດ", ສະແດງເລກທີໜັງສືການອະນຸຍາດ ແລະ ວັນ ໝົດອາຍຸຂອງການອະນຸຍາດ ໂດຍໃຫ້ສະແດງໄວ້ໃນບ່ອນທີ່ຈະແຈ້ງ ເຫັນໄດ້ງ່າຍ ໃນສະຖານທີ່ ທີ່ໄດ້ຮັບອະນຸຍາດ;

5. ມີສະຫຼາກໃສ່ພາຊະນະ ຫຼື ຫີບຫໍ່ບັນຈຸ ນ້ຳມັນທີ່ຖອດຮີດໄດ້ຈາກຜືດປໍ່ແກ້ວ, ໃຫ້ສອດຄ່ອງຕາມຂໍ້ກຳນົດໃນການຮັກສາຄວາມປອດໄພ;

6. ມີລະບົບບັນຊີການຮັບ-ຈ່າຍ ຊໍ່ດອກ, ນ້ຳມັນດອກ, ນ້ຳມັນແກ່ນຈາກພືດປໍ່ແກ້ວ ແລະ ພາກສ່ວນອື່ນໆຂອງພືດປໍ່ແກ້ວ ທີ່ຈະນຳມາເຮັດການຖອດຣິດ, ມີລະບົບ ບັນຊີຕິດຕາມປະລິມານສານ CBD ທີ່ຖອດຣິດໄດ້ ຕາມແບບຟອມທີ່ກຳນົດ;

7. ໃນກໍລະນີທີ່ບໍ່ສາມາດດຳເນີນຕາມແຜນການຖອດຣິດ ທີ່ໄດ້ແຈ້ງໄວ້ ຕ້ອງລາຍງານໃຫ້ ກົມອາຫານ ແລະ ຢາ, ກະຊວງສາທາລະນາສຸກ ຊາບ ຕາມແບບຟອມທີ່ກຳນົດ ພາຍໃນ 5 (ຫ້າ) ວັນ ລັດຖະການ;

8. ໃນກໍລະນີນ້ຳມັນທີ່ໄດ້ຈາກການຖອດຣິດ ແລະ ພາກສ່ວນອື່ນໆ ຈາກພືດປໍ່ແກ້ວ ຖືກສູນເສັຍ ຫຼື ຖືກທຳລາຍ ຕ້ອງແຈ້ງເປັນລາຍລັກອັກສອນ ຕໍ່ ກົມອາຫານ ແລະ ຢາ, ກະຊວງສາທາລະນະສຸກ ຮັບຊາບພາຍໃນ 24 ຊົ່ວໂມງ;

9. ບົດລາຍງານແມ່ນກຳນົດເປັນ ສອງ ສະບັບຄື: ລາຍງານ ໃຫ້ ກົມອາຫານ ແລະ ຢາ, ກະຊວງສາທາລະນະສຸກ ແລະ ເກັບສຳເນົາໄວ້ ໃນສະຖານທີ່ ທີ່ໄດ້ຮັບອະນຸຍາດ;

10. ຜູ້ທີ່ໄດ້ຮັບອະນຸຍາດຕ້ອງໃຫ້ຄວາມຮ່ວມມືກັບເຈົ້າໜ້າທີ່ ໃນການສຸ່ມເກັບຕົວຢ່າງ ເພື່ອຄວບຄຸມໃຫ້ເປັນໄປຕາມລະບຽບການທີ່ໄດ້ກຳນົດໄວ້;

11. ກ່ອນການຂົນສົ່ງ ສານ CBD ໃຫ້ແຈ້ງ ລ່ວງໜ້າ ກ່ອນ 7 (ເຈັດ) ວັນ ໃຫ້ລະບຸຈຳນວນ, ວັນ ແລະ ເວລາ, ຍານພາຫະນະ ແລະ ເສັ້ນທາງການຂົນສົ່ງ ແລະ ຜູ້ຄວບຄຸມການຂົນສົ່ງ ພ້ອມທັງນຳໃບແຈ້ງ ດັ່ງກ່າວ ແລະ ສຳເນົາ ໜັງສື ອະນຸຍາດໄປພ້ອມການຂົນສົ່ງ.

**ມາດຕາ 10 ເງື່ອນໄຂການອະນຸຍາດເກັບຮັກສາ**

ວິສາຫະກິດ ທີ່ມີຈຸດປະສົງ ການຂໍອະນຸຍາດ ເກັບຮັກສາ ພືດປໍ່ແກ້ວ ແມ່ນໃຫ້ປະຕິບັດ ຕາມເງື່ອນໄຂທີ່ລະບຸໄວ້ ໃນ ມາດຕາ 7 ນອກຈາກນັ້ນ ຕ້ອງປະຕິບັດຕາມເງື່ອນໄຂສະເພາະດັ່ງນີ້:

1. ຕ້ອງມີບົດວິພາກ ດ້ານເຕັກນິກວິຊາການໃຫ້ສອດຄ່ອງຕາມເງື່ອນໄຂທີ່ກຳນົດໄວ້;

2. ມີປ້າຍທີ່ເຮັດດ້ວຍວັດຖຸຖາວອນ ທີ່ມີຂະໜາດກວ້າງຢ່າງໜ້ອຍ 50 (ຫ້າສິບ) ຊັງຕີແມັດ, ຍາວຢ່າງໜ້ອຍ 100 ຊັງຕີແມັດ ແລະ ມີຕົວໜັງສືພາສາລາວ ສູງຢ່າງໜ້ອຍ 5 (ຫ້າ) ຊັງຕີແມັດ ສະແດງວັດຖຸປະສົງຂອງການມີໄວ້ເກັບຮັກສາ ຫຼື ມີຄອບຄອງ ເຊັ່ນ: ສະຖານທີ່ເກັບຮັກສາພືດປໍ່ແກ້ວ ເພື່ອການຖອດຣິດ, ສະແດງເລກທີ່ຮັບອະນຸຍາດ ແລະ ວັນສິ້ນສຸດຂອງການອະນຸຍາດ ໂດຍສະແດງ ເຫັນໄດ້ງ່າຍ, ເປີດເຜີຍຢູ່ສະຖານທີ່ ທີ່ໄດ້ຮັບອະນຸຍາດ;

3. ມີສະຖານທີ່ ແລະ ຮັກສາຄວາມປອດໄພ ເພື່ອເກັບຮັກສາ ຊໍ່ດອກ, ນ້ຳມັນດອກ, ນ້ຳມັນແກ່ນ ຈາກພືດປໍ່ແກ້ວ ແລະ ສ່ວນອື່ນໆທີ່ໄດ້ຈາກພືດປໍ່ແກ້ວ ເພື່ອປ້ອງກັນການສູນຫາຍ ຫຼື ຖືກທຳລາຍ, ໃຫ້ແຍກເກັບຮັກສາເປັນສັດສ່ວນ ແລະ ບໍ່ໃຫ້ປົນກັບວັດຖຸອື່ນໆ;

4. ໃນກໍລະນີທີ່ ຊໍ່ດອກ, ນ້ຳມັນດອກ, ນ້ຳມັນແກ່ນ ຈາກພືດປໍ່ແກ້ວ ແລະ ສ່ວນອື່ນໆທີ່ໄດ້ຈາກພືດປໍ່ແກ້ວ ຖືກລັກ ສູນຫາຍ ຫຼື ຖືກທຳລາຍ ຕ້ອງແຈ້ງ ເປັນລາຍລັກອັກສອນ ມາຍັງ ກົມອາຫານ ແລະ ຢາ ຮັບຊາບພາຍໃນ 24 ຊົ່ວໂມງ;

5. ໃຫ້ມີສະຫຼາກຈະແຈ້ງໃນພາຊະນະ ຫຼື ຫີບຫໍ່ບັນຈຸ ຊໍ່ດອກ, ນ້ຳມັນດອກ, ນ້ຳມັນແກ່ນ ຈາກພືດປໍ່ແກ້ວ ແລະ ສ່ວນອື່ນໆ ຕາມທີ່ໄດ້ຮັບອະນຸຍາດ;

6. ໃນກໍລະນີທີ່ບໍ່ສາມາດດຳເນີນການຕາມແຜນການ ເກັບຮັກສາ ຫຼື ມີຄອບຄອງເພື່ອໃຊ້ປະໂຫຍດດັ່ງກ່າວໄດ້ ໃຫ້ແຈ້ງ ມາຍັງ ກົມອາຫານ ແລະ ຢາ ຕາມແບບຟອມທີ່ກຳນົດ ພາຍໃນ 30 (ສາມສິບ) ວັນ ນັບແຕ່ວັນທີ ທີ່ຈະບໍ່ສາມາດດຳເນີນການໄດ້;

7. ສ້າງບັນຊີ ການຮັບ-ຈ່າຍ ຊໍ່ດອກ, ນ້ຳມັນດອກ, ນ້ຳມັນແກ່ນ ຈາກພືດປໍ່ແກ້ວ ແລະ ສ່ວນອື່ນໆ ຕາມທີ່ໄດ້ຮັບອະນຸຍາດ ແລະ ແຈ້ງມາຍັງ ກົມອາຫານ ແລະ ຢາ ປະຈຳເດືອນ, ປີ ຕາມແບບຟອມທີ່ກຳນົດໄວ້;

8. ໃນການສ້າງບັນຊີ ການຮັບ-ຈ່າຍ ຊໍ່ດອກ, ນ້ຳມັນດອກ, ນ້ຳມັນແກ່ນ ຈາກພືດປໍແກ້ວ ແລະ ສ່ວນອື່ນໆ ຕ້ອງສ້າງຂຶ້ນເປັນສອງສະບັບ ສະບັບໜຶ່ງສົ່ງໃຫ້ ກົມອາຫານ ແລະ ຢາ ພາຍໃນ 30 (ສາມສິບ) ວັນ ແລະ ການລາຍງານປະຈຳປີ ຕ້ອງສົ່ງໃຫ້ໃນເດືອນສຸດທ້າຍຂອງປີນັ້ນໆ ແລະ ອີກສະບັບໜຶ່ງແມ່ນເກັບຮັກສາໄວ້ ໃນສະຖານທີ່ທີ່ມີໜັງສືອະນຸຍາດ ພ້ອມດ້ວຍເອກະສານ ຫຼື ຫຼັກຖານກ່ຽວກັບການເກັບຮັກສາ ແລະ ມີຄອບຄອງ ຊໍ່ດອກ, ນ້ຳມັນດອກ, ນ້ຳມັນແກ່ນ ຈາກພືດປໍແກ້ວ ແລະ ສ່ວນອື່ນໆ ທີ່ໄດ້ມີລາຍລະອຽດໄວ້ໃນບັນຊີດັ່ງກ່າວ ມີກຳນົດ 5 (ຫ້າ) ປີ ນັບແຕ່ມື້ທີ່ລົງລາຍການສຸດທ້າຍໃນບັນຊີ;

9. ໃຫ້ຄວາມຮ່ວມມືກັບເຈົ້າໜ້າທີ່ ອາຫານ ແລະ ຢາ ແລະ ພາກສ່ວນທີ່ກ່ຽວຂ້ອງໃນການສຸ່ມເກັບ ຕົວຢ່າງ ຊໍ່ດອກ, ນ້ຳມັນດອກ, ນ້ຳມັນຈາກແກ່ນພືດປໍແກ້ວ ແລະ ສ່ວນອື່ນໆ ເພື່ອຄວບຄຸມ ແລະ ຕິດຕາມເກັບ ກຳໃຫ້ເປັນໄປຕາມທີ່ໄດ້ຮັບອະນຸຍາດ;

10. ແຈ້ງກ່ອນລ່ວງໜ້າ ບໍ່ຕ່ຳກວ່າ 7 (ເຈັດ) ວັນ ຂອງການຂົນສົ່ງ ຊໍ່ດອກ, ນ້ຳມັນດອກ, ນ້ຳມັນຈາກ ແກ່ນພືດປໍແກ້ວ ແລະ ສ່ວນອື່ນໆຕາມທີ່ໄດ້ຮັບອະນຸຍາດ ໂດຍລະບຸປະລິມານ, ວັນ, ເວລາ, ຍານ ພາຫະນະ ແລະ ເສັ້ນທາງການຂົນສົ່ງ ແລະ ຜູ້ຄວບຄຸມການຂົນສົ່ງ ພ້ອມທັງນຳໃບແຈ້ງ ດັ່ງກ່າວ ແລະ ສຳເນົາໜັງສືຮັບຮອງ ໄປ ພ້ອມການຂົນສົ່ງ;

11. ໃນກໍລະນີທີ່ຕ້ອງການຢາກຮູ້ປະລິມານຂອງສານ THC ໃນ ຊໍ່ດອກ, ນ້ຳມັນດອກ, ນ້ຳມັນແກ່ນ ຈາກພືດປໍແກ້ວ ແລະ ສ່ວນອື່ນໆ ໃຫ້ສົ່ງໄປກວດກາທີ່ສະຖານທີ່ກວດກາວິໄຈ ທີ່ ຮັບຮອງໂດຍ ກະຊວງ ສາທາລະນະສຸກ. ຫາກຜົນຂອງການກວດກາວິໄຈມີ ປະລິມານຂອງສານດັ່ງກ່າວເກີນກວ່າກຳນົດ ທີ່ ທາງການ ອະນຸມັດ ໃຫ້ ແຈ້ງມາຍັງ ກົມອາຫານ ແລະ ຢາ ຮັບຊາບໂດຍໄວ ເພື່ອມີມາດຕະການແກ້ໄຂຢ່າງຮັດກຸມ ແລະ ໃນໄລຍະລໍຖ້າມາດຕະການແກ້ໄຂ ຫ້າມດຳເນີນການໃດໆກັບ ຊໍ່ດອກ, ນ້ຳມັນດອກ, ນ້ຳມັນແກ່ນ ຈາກພືດປໍ ແກ້ວ ແລະ ສ່ວນອື່ນໆທີ່ມີປະລິມານ ສານ THC ເກີນມາດຕະຖານ ຢ່າງເດັດຂາດ.

**ມາດຕາ 11 ເງື່ອນໄຂການອະນຸຍາດຈຳໜ່າຍ ແລະ ນຳໃຊ້**

ວິສາຫະກິດ ທີ່ຂໍອະນຸຍາດຈຳໜ່າຍ ແລະ ນຳໃຊ້ຜະລິດຕະພັນຈາກພືດປໍແກ້ວ ທີ່ກຳນົດໃຫ້ມີສານ THC ຕ່ຳກວ່າ 0,2% ແລະ ຕ້ອງປະຕິບັດໄປຕາມເງື່ອນໄຂ ທີ່ລະບຸໄວ້ ໃນ ມາດຕາ 7 ນອກຈາກນັ້ນ ຕ້ອງ ປະຕິບັດຕາມເງື່ອນໄຂສະເພາະດັ່ງນີ້:

1. ຕ້ອງມີບົດວິພາກ ໃຫ້ສອດຄ່ອງຕາມເງື່ອນໄຂທີ່ກຳນົດໄວ້;

2. ນຳໃຊ້ຊໍ່ດອກປໍແກ້ວທີ່ມີ ສານ THC ບໍ່ເກີນ 1% ຂອງນ້ຳໜັກແຫ້ງ;

3. ທຸກຜະລິດຕະພັນອາຫານ, ຢາ ແລະ ຜະລິດຕະພັນການແພດ ທີ່ຈະຈຳໜ່າຍ ແລະ ນຳໃຊ້ໃນທາງ ການແພດ ແມ່ນຕ້ອງໄດ້ຮັບການຄຸ້ມຄອງຄຸນນະພາບ, ປະສິດທິພາບ ແລະ ຄວາມປອດໄພ ໂດຍການຢັ້ງຢືນຈາກ ຜົນການວິໄຈເພື່ອການຄວບຄຸມການບັນຈຸຂອງສານ THC ບໍ່ໃຫ້ເກີນ 0.2% ຂອງນ້ຳໜັກຜະລິດຕະພັນ ແລະ ປະລິມານຂອງ ສານ CBD ຕ້ອງມີຫຼາຍກວ່າ ສານ THC ຢ່າງໜ້ອຍສີ່ເທົ່າ;

4. ຕ້ອງໄດ້ຮັບການຂຶ້ນທະບຽນ ຈາກ ກົມອາຫານ ແລະ ຢາ ກ່ອນ ການຈຳໜ່າຍ ແລະ ນຳໃຊ້ ເພື່ອປົກ ປ້ອງສຸຂະພາບ ແລະ ປະສິດທິຜົນໃນທາງການແພດ.

**ມາດຕາ 12 ເງື່ອນໄຂການອະນຸຍາດນຳເຂົ້າ-ສົ່ງອອກ, ຂົນສົ່ງ**

ວິສາຫະກິດ ທີ່ຂໍອະນຸຍາດນຳເຂົ້າ-ສົ່ງອອກ ຂົນສົ່ງ ຊໍ່ດອກ, ນ້ຳມັນດອກ, ນ້ຳມັນແກ່ນ ຈາກພືດປໍແກ້ວ ແລະ ພາກ ສ່ວນອື່ນໆ ທີ່ມີຄວາມເຂັ້ມຂຸ້ນຕ່າງໆຂອງສານ CBD ແມ່ນຕ້ອງປະຕິບັດຕາມ ໄປຕາມເງື່ອນໄຂ ທີ່ ລະບຸໄວ້ ໃນ ມາດຕາ 7 ນອກຈາກນັ້ນ ຕ້ອງປະຕິບັດຕາມເງື່ອນໄຂດັ່ງນີ້:

1. ຕ້ອງມີບົດວິພາກ ໃຫ້ສອດຄ່ອງຕາມເງື່ອນໄຂທີ່ກຳນົດໄວ້;

2. ການນຳເຂົ້າ-ສົ່ງອອກ ຊໍ່ດອກ, ນ້ຳມັນດອກ, ນ້ຳມັນແກ່ນ ຈາກພືດປ່ັແກ້ວ ແລະ ພາກ ສ່ວນອື່ນໆ ທີ່ມີສານ CBD ເຂັ້ມຂຸ້ນ ທີ່ມີຈຸດປະສົງເພື່ອການຈຳໜ່າຍ ແມ່ນສາມາດດຳເນີນການໄດ້ ພາຍຫຼັງທີ່ໄດ້ຮັບ ອະນຸຍາດ ຈາກ ກົມອາຫານ ແລະ ຢາ, ກະຊວງສາທາລະນະສຸກ;

3. ການຂົນສົ່ງ ຊໍ່ດອກ, ນ້ຳມັນດອກ, ນ້ຳມັນຈາກແກ່ນພືດປ່ັແກ້ວ ແລະ ພາກ ສ່ວນອື່ນໆ ທີ່ມີ ສານ CBD ເຂັ້ມຂຸ້ນ ແມ່ນໃຫ້ດຳເນີນການຕາມ ມາດຕາ 9 ຂໍ້ 11, ມາດຕາ 10 ຂໍ້ 10.

## ໝວດທີ 3
## ເອກະສານຂໍອະນຸຍາດ ແລະ ການພິຈາລະນາ

### ມາດຕາ 13 ເອກະສານຂໍອະນຸຍາດ

ບັນດາເອກະສານ ຂໍອະນຸຍາດທະບຽນວິຊາການ ເພື່ອອະນຸຍາດດຳເນີນກິດຈະການກ່ຽວກັບພືດປ່ັແກ້ວມີ ດັ່ງລຸ່ມນີ້:

1. ໃບຄຳຮ້ອງຂໍໃບອະນຸຍາດທະບຽນວິຊາການ;
2. ໃບຊີວະປະຫວັດຫຍໍ້ (ຕິດຮູບຖ່າຍບໍ່ເກີນ 01 ປີ);
3. ໃບຢັ້ງຢືນສຸຂະພາບ (ບໍ່ເກີນ 3 ເດືອນ);
4. ໃບຢັ້ງຢືນທີ່ຢູ່ປະຈຸບັນ (ຕິດຮູບຖ່າຍບໍ່ເກີນ 03 ເດືອນ);
5. ຮູບຖ່າຍຂະໜາດ 3 x 4 (ຮູບຖ່າຍບໍ່ເກີນ 01 ປີ);
6. ໃບປະກາດຊະນີຍະບັດເພສັຊກຳ (ສຳເນົາ);
7. ໃບແຈ້ງໂທດ;
8. ໃບຢັ້ງຢືນຮັບໃຊ້ວິຊາສະເພາະທາງດ້ານເພສັດຊະກຳ ຫຼື ນັກເຄມີສາດ
9. ໃບຢັ້ງຢືນການອອກລັດຖະການ ຫຼື ໃບແຕ່ງຕັ້ງຂອງກົມກອງກໍລະນີເປັນລັດວິສະຫະກິດ;
10. ໃບອະນຸຍາດການລົງທຶນ (ສຳເນົາ);
11. ໃບທະບຽນວິສາຫະກິດ (ສຳເນົາ);
12. ໃບຢັ້ງຢືນກຳມະສິດ/ສັນຍາເຊົ່າ;
13. ແຜນວາດສະຖານທີ່.
    - ສະຖານທີ່ປູກໃນເຂດສຳປະທານ ແລະ ເສັ້ນທາງເຂົ້າເຖິງສະຖານທີ່ປູກ ແລະ ບອກແຈ້ງກ່ຽວກັບພິກັດຂະໜາດພື້ນທີ່ ທີ່ຂໍອະນຸຍາດ ແລະ ສະຖານທີ່ໃກ້ຄຽງ;
    - ສະຖານທີ່ເຮັດການຖອດຮິດ, ຜະລິດ, ປຸງແຕ່ງ, ເກັບຮັກສາ ພ້ອມແຈ້ງຂະໜາດພື້ນທີ່, ເຂດທີ່ຕັ້ງ ທີ່ຂໍອະນຸຍາດ.
14. ແຜນວາດ ໂຄງສ້າງ ອາຄານ
    - ໂຄງສ້າງ ແລະ ລະບົບອາຄານປູກ ໃນຮົ່ມ ຫຼື ກາງແຈ້ງ (ລະບົບປິດ);
    - ໂຄງສ້າງ ແລະ ລະບົບອາຄານ ຜະລິດຖອດຮິດ, ຜະລິດ, ປຸງແຕ່ງ;
    - ໂຄງສ້າງ ແລະ ລະບົບອາຄານ ການເກັບຮັກສາ;
15. ບົດວິພາກ ການດຳເນີນກິດຈະການ ກ່ຽວກັບພືດປ່ັແກ້ວ.

### ມາດຕາ 14 ຂັ້ນຕອນການພິຈາລະນາ

1. ຍື່ນເອກະສານຄຳຮ້ອງ ມາຍັງ ກົມອາຫານ ແລະ ຢາ, ກະຊວງສາທາລະນະສຸກ ເພື່ອພິຈາລະນາຄວາມຄົບຖ້ວນ ແລະ ຖືກຕ້ອງ ກ່ອນການນຳສະເໜີ ຜ່ານຄະນະກຳມະການ ທີ່ໄດ້ຮັບການແຕ່ງຕັ້ງ ຕາມຈຸດປະສົງທີ່ໄດ້ສະເໜີມາ;

2. ໃນກໍລະນີ ເອກະສານ ຄົບຖ້ວນ ຖືກຕ້ອງ ຈະຖືກນຳສະເໜີ ຕໍ່ ອະນຸກຳມະການ ຄຸ້ມຄອງ ພືດປໍ່ແກ້ວທີ່ໄດ້ຮັບການແຕ່ງຕັ້ງ ເພື່ອພິຈາລະນາອະນຸມັດຕາມປະເພດການຂໍອະນຸຍາດກິດຈະການ ຊຶ່ງຈະດຳເນີນການພິຈາລະນາໃນກຳນົດເວລາດັ່ງນີ້:

- ການຂໍອະນຸຍາດ ປູກ ກຳນົດ 30 (ສາມສິບ) ວັນ;
- ການຂໍອະນຸຍາດ ໂຮງງານ ຖອດຮີດ, ຜະລິດ, ປຸງແຕ່ງ ກຳນົດ 90 (ເກົ້າສິບ) ວັນ;
- ການຂໍອະນຸຍາດຈຳໜ່າຍ ແລະ ນຳໃຊ້ ກຳນົດ 30 (ສາມສິບ) ວັນ;
- ການຂໍອະນຸຍາດ ນຳເຂົ້າ-ສົ່ງອອກ, ຂົນສົ່ງ ກຳນົດ 30 (ສາມສິບ) ວັນ;

3. ຄະນະກຳມະການ ລົງຕິດຕາມ ກວດກາ ສະຖານທີ່ ຕາມ ເງື່ອນໄຂ ຂອງການພິຈາລະນາ;

4. ໃນກໍລະນີຄຳຮ້ອງບໍ່ຄົບຖ້ວນ ຈະໄດ້ແຈ້ງຄືນຫາ ຜູ້ປະກອບການເພື່ອປັບປຸງແກ້ໄຂ ພາຍໃນ 5 (ຫ້າ) ວັນ ລັດຖະການ ເພື່ອໃຫ້ ຜູ້ປະກອບການ ປັບປຸງແກ້ໄຂ ພາຍໃນ 30 (ສາມສິບ) ວັນ ລັດຖະການ;

5. ໃນກໍລະນີ ຜູ້ປະກອບການບໍ່ດຳເນີນຕາມການແນະນຳ ທີ່ໄດ້ລະບຸໄວ້ໃນຂໍ້ທີ 04 ຈະບໍ່ໄດ້ຮັບການພິຈາລະນາ ແລະ ເອກະສານຈະຖືກຖອນ ແລະ ແຈ້ງໃຫ້ ຜູ້ຂໍອະນຸຍາດ ຮັບຊາບ;

6. ການອະນຸຍາດ ແມ່ນຈະໄດ້ຮັບໜັງສື ຢັ້ງຢືນ ເພື່ອສະແດງເຖິງການອະນຸຍາດ ຕາມແບບຟອມທີ່ກຳນົດໄວ້.

## ໝວດທີ 4
## ຫຼັກການດຳເນີນພາຍຫຼັງການອະນຸຍາດ

**ມາດຕາ 15 ຫຼັກການການດຳເນີນພາຍຫຼັງຮັບອະນຸຍາດການປູກ**

ພາຍຫຼັງ ວິສາຫະກິດ ໄດ້ຮັບອະນຸຍາດປູກ ພືດປໍ່ແກ້ວ ແລ້ວ ແມ່ນມີຫຼັກການ ການດຳເນີນການປະຕິບັດດັ່ງນີ້:

1. ປູກຕົ້ນປໍ່ແກ້ວໃນສະຖານທີ່ ທີ່ໄດ້ກຳນົດໃນໜັງສືການອະນຸຍາດເທົ່ານັ້ນ;

2. ການປູກທຸກຄັ້ງຕ້ອງໃຊ້ແກ່ນພັນທີ່ຖືກຮັບຮອງຢ່າງເປັນທາງການ, ອາດຈະແມ່ນແກ່ນພັນທີ່ ພັດທະນາຂຶ້ນ ພາຍໃນ ຫຼື ນຳເຂົ້າຈາກຕ່າງປະເທດ ທີ່ໄດ້ຮັບອະນຸຍາດຈາກອົງການຄຸ້ມຄອງທີ່ກ່ຽວຂ້ອງ ຈາກປະເທດ ຜູ້ສົ່ງອອກ ແລະ ໃຫ້ສອດຄ່ອງກັບລະບຽບການຄຸ້ມຄອງຂອງ ສປປ ລາວ;

3. ຕ້ອງມີຮົ້ວ ຫຼື ກຳແພງ ອ້ອມພື້ນທີ່ການເພາະປູກ ຢ່າງແໜ້ນໜາທີ່ຮັບປະກັນ ຕາມຮູບແບບເຕັກນິກວິຊາການ;

4. ຕ້ອງມີປ້າຍທີ່ເຮັດດ້ວຍວັດຖຸທີ່ມີຄວາມທົນທານ ມີຂະໜາດກວ້າງ ຫ້າສິບ ຊັງຕີແມັດ ແລະ ຍາວໜຶ່ງຮ້ອຍ ຊັງຕີແມັດ ແລະ ມີຂໍ້ຄວາມເປັນຕົວໜັງສືພາສາລາວ ສູງ 5 (ຫ້າ) ຊັງຕີແມັດ ຂຶ້ນໄປ ພ້ອມທັງ ສະແດງວັດຖຸປະສົງຂອງການປູກ ເຊັ່ນ: “ສະຖານທີ່ປູກພືດປໍ່ແກ້ວ ເພື່ອໃຊ້ປະໂຫຍດໃນທາງການແພດ”, ສະແດງເລກທີໜັງສືຮັບຮອງການປູກ, ຊື່ຜູ້ໄດ້ຮັບອະນຸຍາດ ແລະ ມື້ໝົດອາຍຸ ຂອງການອະນຸຍາດ ຕາມໜັງສືຮັບຮອງ ໂດຍໃຫ້ສະແດງໄວ້ໃນທີ່ເປີດເຜີຍ ເຫັນໄດ້ງ່າຍ ໃນສະຖານທີ່ ທີ່ໄດ້ຮັບອະນຸຍາດ;

5. ຕ້ອງຈັດໃຫ້ມີສະຖານທີ່ຂອງການເກັບຮັກສາທີ່ມີຄວາມປອດໄພ ເພື່ອເກັບຮັກສາແກ່ນພັນທີ່ຖືກຮັບຮອງ ຫຼື ສ່ວນອື່ນຂອງພືດປໍ່ແກ້ວເພື່ອປ້ອງກັນການສູນຫາຍ ຫຼື ຖືກທຳລາຍ ໂດຍແຍກເປັນສັດສ່ວນ ແລະ ບໍ່ໃຫ້ປົນກັບວັດຖຸອື່ນ;

6. ໃນກໍລະນີທີ່ ແກ່ນພັນ ຫຼື ສ່ວນອື່ນຂອງພືດປໍ່ແກ້ວ ທີ່ໄດ້ຮັບຮອງ, ຖືກສູນເສຍ ຫຼື ຖືກທຳລາຍ ຫຼື ກໍລະນີທີ່ເຫຼືອ ຈາກການປູກ ຕ້ອງແຈ້ງເປັນລາຍລັກອັກສອນ ຕໍ່ ກົມອາຫານ ແລະ ຢາ, ກະຊວງສາທາລະນະສຸກ ຮັບຊາບໂດຍໄວ;

7. ຜູ້ໄດ້ຮັບອະນຸຍາດຕ້ອງຮັບປະກັນໃຫ້ມີການກວດກາວິໄຈເພື່ອຫາປະລິມານສານ THC ໃນພືດປໍ່ແກ້ວທີ່ປູກທຸກຄັ້ງ ແລະ ຕ້ອງໄດ້ຮັບການຢັ້ງຢືນ ຈາກ ຫ້ອງວິໄຈ ຂອງ ກະຊວງສາທາລະນະສຸກ ຮັບຮອງ;

8. ໃບຢັ້ງຢືນການວິໄຈ ດັ່ງກ່າວຕ້ອງເກັບຮັກສາໄວ້ ຢ່າງໜ້ອຍ 5 (ຫ້າ) ປີ ນັບແຕ່ມື້ທີ່ ຢັ້ງຢືນການວິໄຈເປັນທາງການ; ໃນກໍລະນີທີ່ຜູ້ຮັບອະນຸຍາດກວດພົບປະລິມານສານ THC ເກີນກວ່າທີ່ທາງການກຳນົດ ຕ້ອງແຈ້ງ ກົມອາຫານ ແລະ ຢາ ຮັບຊາບ ໂດຍໄວ ເພື່ອ ດຳເນີນມາດຕະການຄຸ້ມຄອງ ແລະ ແກ້ໄຂຢ່າງຮັດກຸມ.

9. ມີສະຫຼາກໃສ່ພາຊະນະ ຫຼື ຫີບຫໍ່ ແກ່ນພັນທີ່ຖືກຮັບຮອງ ທີ່ສະແດງເຖິງ:

ກ) ຂໍ້ມູນຊື່ແກ່ນພັນ;

ຂ) ອັດຕາການງອກຂອງແກ່ນພັນທີ່ຖືກຮັບຮອງ ແລະ ລະບຸວັນເດືອນປີທີ່ທົດສອບ;

ຄ) ສະຖານທີ່ປູກ;

ງ) ວັນ ເດືອນ ແລະ ປີ ຂອງການເກັບກູ້;

ຈ) ຊຸດການປູກ;

ສ) ນ້ຳໜັກສຸດທິ;

ຊ) ຊື່ ແລະ ທີ່ຢູ່ ຂອງຜູ້ຜະລິດແກ່ນພັນ.

10. ດຳເນີນຕາມແຜນການ ຖອດຣິດ, ຜະລິດ, ປຸງແຕ່ງ ຕາມເປົ້າໝາຍການນຳໃຊ້, ໃນກໍລະນີທີ່ບໍ່ສາມາດດຳເນີນການຕາມແຜນດັ່ງກ່າວ ໃຫ້ແຈ້ງ ກົມອາຫານ ແລະ ຢາ ຕາມແບບຟອມທີ່ກຳນົດໄວ້ ພາຍໃນ 30 (ສາມສິບ) ວັນ;

11. ສ້າງບັນຊີການຮັບ ແລະ ການຈ່າຍ ແກ່ນພັນ ແລະ ສ່ວນຕ່າງໆ ຂອງພືດປໍ່ແກ້ວ ທີ່ ໄດ້ຮັບອະນຸຍາດ ເພື່ອ ເກັບກຳຂໍ້ມູນ ແລະ ລາຍງານ ມາຍັງ ກົມອາຫານ ແລະ ຢາ ເປັນແຕ່ລະໄລຍະຕາມແບບຟອມທີ່ກຳນົດໄວ້;

12. ການລາຍງານ ພ້ອມດ້ວຍເອກະສານ ຫຼື ຫຼັກຖານກ່ຽວກັບການຮັບ ແລະ ການຈ່າຍດັ່ງກ່າວ ແມ່ນໃຫ້ເຮັດ ເປັນສອງສະບັບ ສະບັບໜຶ່ງໃຫ້ສະເໜີ ຕໍ່ ກົມອາຫານ ແລະ ຢາ ແລະ ອີກສະບັບໜຶ່ງ ແມ່ນເກັບຮັກສາໄວ້ໃນສະຖານທີ່ ທີ່ໄດ້ຮັບອະນຸຍາດ. ການລາຍງານ ແມ່ນມື້ສຸດທ້າຍຂອງເດືອນ ແລະ ມື້ສຸດທ້າຍຂອງປີ ແລ້ວແຕ່ກໍລະນີ. ບົດລາຍງານດັ່ງກ່າວ ຕ້ອງ ເກັບຮັກສາໄວ້ ໃນກຳນົດເວລາ 5 (ຫ້າ) ປີ;

13. ກ່ອນການເກັບກູ້ພືດປໍ່ແກ້ວ ຕ້ອງແຈ້ງວັນເວລາ ແລະ ຄາດຄະເນການເກັບກູ້ ລ່ວງໜ້າຢ່າງໜ້ອຍ 30 (ສາມສິບ) ວັນ ເພື່ອລົງຕິດຕາມຄວບຄຸມການເກັບກູ້. ຫຼັງຈາກໄດ້ດຳເນີນການເກັບກູ້ແລ້ວ, ສ່ວນອື່ນໆທີ່ບໍ່ກ່ຽວຂ້ອງກັບຈຸດປະສົງຂອງການອະນຸຍາດ ໃຫ້ດຳເນີນການທຳລາຍ ຕໍ່ໜ້າເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ພ້ອມບັນທຶກຫຼັກຖານ ແລະ ຖ່າຍຮູບໄວ້;

14. ໃຫ້ຄວາມຮ່ວມມືກັບເຈົ້າໜ້າທີ່ໃນການຊຸ່ມເກັບຕົວຢ່າງ ແກ່ນພັນ ຫຼື ພາກສ່ວນອື່ນໆ ຈາກພືດປໍ່ແກ້ວເພື່ອຄວບຄຸມ ແລະ ຕິດຕາມໃຫ້ສອດຄ່ອງ ຕາມລະບຽບການທີ່ໄດ້ກຳນົດໄວ້;

15. ຮັບຜິດຊອບຕໍ່ລະບຽບການ ໃນກໍລະນີພົບເກັບກ່ຽວ ພົບປະລິມານຂອງສານ THC ມີປະລິມານເກີນຂອບເຂດທີ່ທາງການອະນຸຍາດ;

16. ກ່ອນການຂົນສົ່ງ ຕ້ອງແຈ້ງ ກ່ອນລ່ວງໜ້າ ຢ່າງໜ້ອຍ 7 (ເຈັດ) ວັນ ໂດຍລະບຸ ປະລິມານ, ວັນ, ເວລາ, ຍານພາຫະນະ, ເສັ້ນທາງການຂົນສົ່ງ ແລະ ຜູ້ຄວບຄຸມການຂົນສົ່ງ ພ້ອມທັງນຳໃບແຈ້ງ ດັ່ງກ່າວ ແລະ ສຳເນົາໜັງສື ອະນຸຍາດໄປພ້ອມການຂົນສົ່ງ.

**ມາດຕາ 16 ຫຼັກການການດຳເນີນພາຍຫຼັງຮັບອະນຸຍາດການຖອດຣິດ, ຜະລິດ, ປຸງແຕ່ງ**

ພາຍຫຼັງ ວິສາຫະກິດ ທີ່ໄດ້ຮັບອະນຸຍາດໃຫ້ຖອດຣິດ, ຜະລິດ, ປຸງແຕ່ງ ແມ່ນສາມາດນຳໃຊ້ສ່ວນຕ່າງໆຈາກພືດປໍ່ແກ້ວເພື່ອເຮັດການຖອດຣິດ, ຜະລິດ, ປຸງແຕ່ງ ໄດ້ດັ່ງນີ້:

1. ພາກສ່ວນແກ່ນປໍແກ້ວ ນຳໃຊ້ໃນການຖອດຣິດ ເອົານ້ຳມັນ ເພື່ອເປັນສ່ວນປະກອບຂອງອາຫານ, ຢາຫຼວງ, ຢາພື້ນ ເມືອງ ແລະ ຜະລິດຕະພັນເສີມສຸຂະພາບ;

2. ພາກສ່ວນຊໍ່ດອກປໍແກ້ວ ນຳໃຊ້ເພື່ອເປັນສ່ວນປະສົມ ໃນການຜະລິດ, ປຸງແຕ່ງ (ຢາຫຼວງ, ຢາພື້ນເມືອງ ແລະ ຜະລິດຕະພັນເສີມສຸຂະພາບ), ສ່ວນປະສົມອາຫານ (ຍົກເວັ້ນ ອາຫານ ສຳລັບເດັກ), ເຄື່ອງດື່ມ ແລະ ເຄື່ອງສຳອາງ (ຍົກເວັ້ນ ເຄື່ອງສຳອາງທີ່ໃຊ້ ທາງຜົ້ງປາກ ແລະ ທາງຊ່ອງຄອດ) ແມ່ນສາມາດນຳໃຊ້ສານ CBD ເຂົ້າເປັນສ່ວນປະກອບ ເພື່ອປະໂຫຍດທາງການແພດ ແລະ ອະນຸຍາດໃຫ້ມີສານ THC ບໍ່ເກີນ 1% ໃນນ້ຳໜັກແຫ້ງພືດປໍແກ້ວ ແລະ ຖ້າເປັນຜະລິດຕະພັນສຳເລັດຮູບໃດນຶ່ງຈາກພືດປໍແກ້ວ ທີ່ມີສານ CBD ເຂົ້າເປັນສ່ວນປະກອບ ແມ່ນອະນຸຍາດໃຫ້ມີສານ THC ບໍ່ເກີນ 0,2%;

3. ພາກສ່ວນໃບປໍແກ້ວ ນຳໃຊ້ເຂົ້າໃນຕຳລາຢາພື້ນເມືອງແບບດັ້ງເດີມ, ຊາພື້ນເມືອງ ແລະ ເຄື່ອງສຳອາງ;

4. ພາກສ່ວນເປືອກ/ລຳຕົ້ນ/ເສັ້ນໄຍ/ກິ່ງກ້ານ/ຮາກປໍແກ້ວ ສາມາດນຳໃຊ້ເຂົ້າໃນຕຳລາຢາພື້ນເມືອງ ແບບດັ້ງເດີມ, ເຄື່ອງສຳອາງ ຈຳພວກຂັດຖູ ຫຼື ອະນາໄມ ເຊິ່ງ ເປັນຜະລິດຕະພັນໃຊ້ແລ້ວລ້າງອອກ.

**ມາດຕາ 17 ຫຼັກການການດຳເນີນພາຍຫຼັງຮັບອະນຸຍາດການເກັບຮັກສາ**

ພາຍຫຼັງວິສາຫະກິດ ໄດ້ຮັບອະນຸຍາດໃຫ້ ເກັບຮັກສາພືດປໍແກ້ວແລ້ວ ແມ່ນຕ້ອງໄດ້ປະຕິບັດດັ່ງນີ້:

1. ຈັດໃຫ້ມີສະຖານທີ່ ແລະ ການຮັກສາຄວາມປອດໄພ ເພື່ອເກັບຮັກສາ ຊໍ່ດອກ, ນ້ຳມັນດອກ, ນ້ຳມັນແກ່ນ ຈາກພືດປໍແກ້ວ ແລະ ສ່ວນອື່ນໆທີ່ໄດ້ຈາກພືດປໍແກ້ວ ເພື່ອປ້ອງກັນການສູນຫາຍ ຫຼື ຖືກທຳລາຍ, ໃຫ້ແຍກເກັບຮັກສາເປັນສັດສ່ວນ ແລະ ບໍ່ໃຫ້ປົນກັບວັດຖຸອື່ນໆ;

2. ມີປ້າຍທີ່ເຮັດດ້ວຍວັດຖຸຖາວອນ ທີ່ມີຂະໜາດກວ້າງບໍ່ໜ້ອຍກວ່າ 50 (ຫ້າສິບ) ຊັງຕີແມັດ ຍາວບໍ່ໜ້ອຍກວ່າ 100 (ໜຶ່ງຮ້ອຍ) ຊັງຕີແມັດ ແລະ ມີຂໍ້ຄວາມເປັນຕົວໜັງສືລາວ ສູງບໍ່ໜ້ອຍກວ່າ 5 ຊັງຕີແມັດ ສະແດງວັດຖຸປະສົງຂອງການມີໄວ້ໃນຄອບຄອງ ເຊັ່ນ: ສະຖານທີ່ເກັບຮັກສາພືດປໍແກ້ວ ເພື່ອການຖອດຣິດ, ສະແດງເລກທີໜັງສືຮັບຮອງ ຊື່ຜູ້ຮັບອະນຸຍາດ ແລະ ເວລາສິ້ນສຸດຂອງການອະນຸຍາດຕາມໜັງສືຮັບຮອງ ໂດຍສະແດງໄວ້ໃນສະຖານທີ່ເປີດເຜີຍ ເຫັນໄດ້ງ່າຍ ໃນສະຖານທີ່ ທີ່ໄດ້ຮັບອະນຸຍາດ;

3. ໃນກໍລະນີທີ່ ຊໍ່ດອກ, ນ້ຳມັນດອກ, ນ້ຳມັນແກ່ນ ຈາກພືດປໍແກ້ວ ແລະ ສ່ວນອື່ນໆທີ່ໄດ້ຈາກພືດປໍແກ້ວ ຖືກລັກ ສູນຫາຍ ຫຼື ຖືກທຳລາຍ ຕ້ອງແຈ້ງ ເປັນລາຍລັກອັກສອນຕໍ່ ກົມອາຫານ ແລະ ຢາ ເພື່ອຊາບໂດຍໄວ;

4. ມີສະຫຼາກຢູ່ພາຊະນະ ຫຼື ຫີບຫໍ່ບັນຈຸ ຊໍ່ດອກ, ນ້ຳມັນດອກ, ນ້ຳມັນແກ່ນ ຈາກພືດປໍແກ້ວ ແລະ ສ່ວນອື່ນໆ ຕາມທີ່ໄດ້ຮັບອະນຸຍາດ ບໍ່ໃຫ້ເປ່ເພ;

5. ໃນກໍລະນີທີ່ບໍ່ສາມາດດຳເນີນການຕາມແຜນການເກັບຮັກສາເພື່ອໃຊ້ປະໂຫຍດດັ່ງກ່າວໄດ້ໃຫ້ແຈ້ງຕໍ່ ກົມອາຫານ ແລະ ຢາ ຕາມແບບຟອມທີ່ກຳນົດ ພາຍໃນ 30 (ສາມສິບ) ວັນ ນັບແຕ່ວັນທີ ທີ່ຈະບໍ່ສາມາດດຳເນີນການໄດ້ດັ່ງກ່າວ;

6. ສ້າງບັນຊີ ການຮັບ ການຈ່າຍ ຊໍ່ດອກ, ນ້ຳມັນດອກ, ນ້ຳມັນແກ່ນ ຈາກພືດປໍແກ້ວ ແລະ ສ່ວນອື່ນໆ ຕາມທີ່ໄດ້ຮັບອະນຸຍາດ ແລະ ແຈ້ງຕໍ່ ກົມ ອາຫານ ແລະ ຢາ ເປັນແຕ່ລະເດືອນ ແລະ ປີ ຕາມແບບຟອມທີ່ກຳນົດໄວ້. ຜູ້ທີ່ຈະຮັບຊໍ່ດອກ, ນ້ຳມັນດອກ, ແກ່ນຈາກພືດປໍແກ້ວ ແລະ ສ່ວນອື່ນໆ ຕ້ອງເປັນ ວິສາຫະກິດ ທີ່ໄດ້ຮັບອະນຸຍາດຢ່າງເປັນທາງການເທົ່ານັ້ນ;

ໃນການສ້າງບັນຊີ ການຮັບ ການຈ່າຍ ຊໍ່ດອກ, ນ້ຳມັນດອກ, ນ້ຳມັນແກ່ນ ຈາກພືດປໍແກ້ວ ແລະ ສ່ວນອື່ນໆ ຕ້ອງເຮັດເປັນສອງສະບັບ ສະບັບໜຶ່ງໃຫ້ສະເໜີຕໍ່ ກົມອາຫານ ແລະ ຢາພາຍໃນ 30 (ສາມສິບ) ວັນ ແລະ ອີກສະບັບໜຶ່ງແມ່ນເກັບຮັກສາໄວ້ໃນສະຖານທີ່ທີ່ກຳນົດໄວ້ໃນໜັງສືຮັບຮອງ ພ້ອມດ້ວຍເອກະສານ ຫຼື ຫຼັກຖານກ່ຽວກັບການຮັບ ການຮັກສາ ຊໍ່ດອກ, ນ້ຳມັນດອກ, ນ້ຳມັນແກ່ນ ຈາກພືດປໍແກ້ວ ແລະ ສ່ວນອື່ນໆ ທີ່ໄດ້ບັນທຶກຂໍ້ມູນໄວ້ໃນບັນຊີດັ່ງກ່າວ ມີກຳນົດ 5 (ຫ້າ) ປີ.

7. ໃຫ້ຄວາມຮ່ວມມືກັບພະນັກງານເຈົ້າໜ້າທີ່ຂອງລັດທີ່ກ່ຽວຂ້ອງໃນການສຸ່ມເກັບຕົວຢ່າງ ຊໍ່ດອກ, ນ້ຳມັນດອກ, ນ້ຳມັນແກ່ນ ຈາກພືດປໍ່ແກ້ວ ແລະ ສ່ວນອື່ນໆ ເພື່ອຄວບຄຸມ ແລະ ກຳກັບໃຫ້ເປັນໄປຕາມທີ່ໄດ້ຮັບອະນຸຍາດ;

8. ແຈ້ງກຳນົດເວລາລ່ວງໜ້າບໍ່ຕ່ຳກວ່າ 7 (ເຈັດ) ວັນ ກ່ອນການຂົນສົ່ງ ຊໍ່ດອກ, ນ້ຳມັນດອກ, ນ້ຳມັນແກ່ນ ຈາກພືດປໍ່ແກ້ວ ແລະ ສ່ວນອື່ນໆຕາມທີ່ໄດ້ຮັບອະນຸຍາດ ຕໍ່ ກົມອາຫານ ແລະ ຢາ ໂດຍ ລະບຸປະລິມານ ວັນ ແລະ ເວລາ, ຍານພາຫະນະ ແລະ ເສັ້ນທາງການຂົນສົ່ງ ແລະ ຜູ້ຄວບຄຸມການຂົນສົ່ງ ພ້ອມທັງນຳໃບແຈ້ງດັ່ງກ່າວ ແລະ ສຳເນົາໜັງສືຮັບຮອງໄປພ້ອມການຂົນສົ່ງ;

9. ໃນກໍລະນີທີ່ຕ້ອງການຢາກຮູ້ປະລິມານຂອງສານ THC ໃນ ຊໍ່ດອກ, ນ້ຳມັນດອກ, ແກ່ນຈາກພືດປໍ່ແກ້ວ ແລະ ສ່ວນ ອື່ນໆ ໃຫ້ສົ່ງໄປກວດກາທີ່ຫ້ອງກວດກາວິໄຈ ທີ່ຂຶ້ນກັບ ກະຊວງສາທາລະນະສຸກ. ຫາກຜົນຂອງການກວດກາວິໄຈມີປະລິມານຂອງ ສານ THC ເກີນກວ່າກຳນົດທີ່ທາງການອະນຸມັດ ໃຫ້ຜູ້ສົ່ງກວດ ແຈ້ງຕໍ່ ກົມອາຫານ ແລະ ຢາ ຮັບຊາບໂດຍໄວ ເພື່ອມີມາດຕະການແກ້ໄຂຢ່າງຮັດກຸມ. ໃນໄລຍະລໍຖ້າມາດຕະການແກ້ໄຂ ຫ້າມດຳເນີນການໃດໆກັບ ຊໍ່ດອກ, ນ້ຳມັນດອກ, ແກ່ນຈາກພືດປໍ່ແກ້ວ ແລະ ສ່ວນອື່ນໆທີ່ມີປະລິມານເກີນມາດຕະຖານ ຢ່າງເດັດຂາດ.

**ມາດຕາ 18 ຫຼັກການການດຳເນີນພາຍຫຼັງໄດ້ຮັບອະນຸຍາດການຈຳໜ່າຍ ແລະ ນຳໃຊ້**

ພາຍຫຼັງ ວິສາຫະກິດ ໄດ້ຮັບອະນຸຍາດໃຫ້ ຈຳໜ່າຍ ຊື້-ຂາຍ ແລະ ນຳໃຊ້ພືດປໍ່ແກ້ວ ແລະ ຜະລິດຕະພັນຈາກພືດປໍ່ແກ້ວ ທີ່ກຳນົດໃຫ້ມີສານ THC ຕ່ຳກວ່າ 0,2% ແມ່ນກຳນົດຄືດັ່ງນີ້:

1. ຊໍ່ດອກປໍ່ແກ້ວ ແມ່ນໃຫ້ມີ ສານ THC ຕ່ຳກວ່າ 1% ຂອງນ້ຳໜັກແຫ້ງ; ຜະລິດຕະພັນຢາທີ່ຈະໃຊ້ໃນທາງການແພດ ແມ່ນໃຫ້ມີ ສານ THC ບໍ່ເກີນ 0,2% ຂອງນ້ຳໜັກຜະລິດຕະພັນ ເພື່ອປົກປ້ອງສຸຂະພາບ ແລະ ປະສິດທິຜົນໃນທາງການແພດ ປະລິມານຂອງສານ CBD ຕ້ອງມີຫຼາຍກວ່າ THC ຢ່າງໜ້ອຍສີ່ເທົ່າ ແລະ ໄດ້ຂຶ້ນທະບຽນຢູ່ ກົມອາຫານ ແລະ ຢາ ແມ່ນສາມາດນຳໃຊ້ໄດ້ ແຕ່ຕ້ອງນຳໃຊ້ຕາມໃບສັ່ງແພດເທົ່ານັ້ນ;

2. ຜະລິດຕະພັນເສີມສຸຂະພາບ ທີ່ມີ ສານ CBD ເປັນຫຼັກ ແລະ ມີ ສານ THC ຕ່ຳກວ່າ 0,2% ຂອງນ້ຳໜັກຜະລິດຕະພັນ, ໄດ້ຂຶ້ນທະບຽນຢູ່ ກົມອາຫານ ແລະ ຢາ ແມ່ນສາມາດຈຳໜ່າຍ ຊື້-ຂາຍ ແລະ ນຳໃຊ້ໄດ້ຕາມຄຳແນະນຳທີ່ມີໃນສະຫຼາກຂອງຜະລິດຕະພັນ ໂດຍບໍ່ມີໃບສັ່ງແພດ;

3. ເຄື່ອງສຳອາງທີ່ມີ ສານ CBD ເປັນສ່ວນປະກອບຫຼັກ ແລະ ໄດ້ຂຶ້ນທະບຽນຢູ່ ກົມອາຫານ ແລະ ຢາ ແມ່ນສາມາດ ຈຳ ໜ່າຍ ຊື້-ຂາຍ ແລະ ນຳໃຊ້ທົ່ວໄປໄດ້;

4. ເຄື່ອງດື່ມທີ່ມີ ສານ CBD ຫຼື ນ້ຳມັນຫອມລະເຫີຍຈາກ ພືດປໍ່ແກ້ວ ໃນປະລິມານທີ່ກຳນົດ ແລະ ໄດ້ຂຶ້ນທະບຽນຢູ່ ກົມອາຫານ ແລະ ຢາ ແມ່ນສາມາດ ຈຳໜ່າຍ ຊື້-ຂາຍ ແລະ ນຳໃຊ້ຕາມທີ່ກຳນົດໄວ້ໃນສະຫຼາກຂອງແຕ່ລະຜະລິດຕະພັນ.

**ມາດຕາ 19 ຫຼັກການການດຳເນີນພາຍຫຼັງໄດ້ຮັບອະນຸຍາດການນຳເຂົ້າ-ສົ່ງອອກ, ຂົນສົ່ງ**

1. ພາຍຫຼັງ ວິສາຫະກິດ ໄດ້ຮັບອະນຸຍາດນຳເຂົ້າ-ສົ່ງອອກ, ຂົນສົ່ງ ຊໍ່ດອກ, ນ້ຳມັນດອກ, ນ້ຳມັນແກ່ນຈາກພືດປໍ່ແກ້ວ ແລະ ສ່ວນອື່ນໆ ທີ່ມີ ສານ CBD ເຂັ້ມຂຸ້ນ ແມ່ນສາມາດດຳເນີນການໄດ້ ພາຍຫຼັງໄດ້ຮັບອະນຸຍາດຈາກ ກົມອາຫານ ແລະ ຢາ, ກະຊວງສາທາລະນະສຸກ ເປັນແຕ່ລະຄັ້ງໄປ;

2. ສຳລັບການຂົນສົ່ງ ຊໍ່ດອກ, ນ້ຳມັນດອກ, ນ້ຳມັນແກ່ນຈາກພືດປໍ່ແກ້ວ ແລະ ພາກສ່ວນອື່ນໆທີ່ມີຄວາມເຂັ້ມຂຸ້ນ ຂອງສານ CBD ແມ່ນໃຫ້ດຳເນີນການຕາມ ມາດຕາ 9 ຂໍ້ 11, ມາດຕາ 10 ຂໍ້ 10, ມາດຕາ 15 ຂໍ້ 16.

## ໝວດທີ 5
## ອາຍຸຂອງໃບອະນຸຍາດ, ການໂຈະ, ການຢຸດເຊົາ ແລະ ການຖອນໃບທະບຽນ

**ມາດຕາ 20 ອາຍຸຂອງໃບອະນຸຍາດ**

ໃບອະນຸຍາດດຳເນີນກິດຈະການກ່ຽວກັບພືດປໍແກ້ວ ມີອາຍຸການນຳໃຊ້ 3 (ສາມ) ປີ, ກ່ອນໃບອະນຸຍາດໝົດອາຍຸ 3 (ສາມ) ເດືອນ ຜູ້ດຳເນີນກິດຈະການຕ້ອງປະກອບເອກະສານເພື່ອຂໍຕໍ່ອາຍຸຄືນໃໝ່ຕາມແບບຟອມທີ່ກຳນົດໄວ້.

**ມາດຕາ 21 ການໂຈະການດຳເນີນກິດຈະການ**

ການດຳເນີນ ກິດຈະການ ກ່ຽວກັບພືດປໍແກ້ວ ຈະຖືກໂຈະໃນກໍລະນີດັ່ງນີ້:

1. ການສະເໜີຂໍໂຈະຂອງຜູ້ດຳເນີນກິດຈະການ;
2. ຜູ້ດຳເນີນ ກິດຈະການບໍ່ປະຕິບັດຕາມຈຸດປະສົງ ແລະ ເປົ້າໝາຍ ທີ່ໄດ້ຮັບອະນຸຍາດ;
3. ຜູ້ປະກອບການຖືກກ່າວເຕືອນ ສອງຄັ້ງຕິດຕໍ່ກັນ ໂດຍບໍ່ມີການແກ້ໄຂ ຫຼື ປັບປຸງ;
4. ບໍ່ດຳເນີນ ກິດຈະການຕາມທີ່ໄດ້ຮັບອະນຸຍາດຈາກ ກະຊວງສາທາລະນະສຸກ ເປັນເວລາ 2 (ສອງ) ປີ;
5. ດຳເນີນ ກິດຈະການບໍ່ຖືກຕ້ອງສອດຄ່ອງຕາມກົດໝາຍ ແລະ ລະບຽບການ;
6. ການໂຈະແມ່ນມີກຳນົດ ເພື່ອລໍຖ້າການປັບປຸງ, ໃນເມື່ອມີການປັບປຸງຢ່າງສອດຄ່ອງແລ້ວ ການຈັດຕັ້ງກ່ຽວຂ້ອງຈະດຳເນີນການພິຈາລະນາໃຫ້ສືບຕໍ່ກິດຈະການ ຕາມເງື່ອນໄຂ.

**ມາດຕາ 22 ການຢຸດເຊົາ ກິດຈະການ**

ຜູ້ດຳເນີນກິດຈະການກ່ຽວກັບພືດປໍແກ້ວ ສາມາດຢຸດເຊົາກິດຈະການໄດ້ ເຊິ່ງມີ ສອງ ກໍລະນີ ຢຸດເຊົາຊົ່ວຄາວ ແລະ ການຢຸດເຊົາຖາວອນ ໂດຍຕ້ອງປະຕິບັດຕາມຂັ້ນຕອນດັ່ງນີ້:

1. ຢຸດເຊົາຊົ່ວຄາວ ຜູ້ດຳເນີນກິດຈະການຕ້ອງຍື່ນຄຳຮ້ອງເພື່ອແຈ້ງເຈດຈຳນົງຂໍຢຸດເຊົາ ຕໍ່ ກົມອາຫານ ແລະ ຢາ ລ່ວງໜ້າກ່ອນ 1 (ໜຶ່ງ) ເດືອນ ພ້ອມໃຫ້ເຫດຜົນ ເພື່ອພິຈາລະນາອອກໃບຢັ້ງຢືນການຢຸດເຊົາ, ພາຍຫຼັງຢຸດເຊົາແລ້ວກ່ອນຈະດຳເນີນກິດຈະການຄືນໃໝ່ ໃຫ້ສະເໜີມາຍັງ ກົມອາຫານ ແລະ ຢາ ເພື່ອຄົ້ນຄ້ວາພິຈາລະນາ ຕາມລະບຽບການ;
2. ຢຸດເຊົາຖາວອນ ຜູ້ດຳເນີນກິດຈະການຕ້ອງຍື່ນຄຳຮ້ອງເພື່ອແຈ້ງເຈດຈຳນົງຂໍຢຸດເຊົາ ຕໍ່ ກົມອາຫານ ແລະ ຢາ ລ່ວງໜ້າກ່ອນ 1 (ໜຶ່ງ) ເດືອນ ພ້ອມໃຫ້ເຫດຜົນ ເພື່ອພິຈາລະນາອອກໃບຢັ້ງຢືນການຢຸດຖາວອນ.

**ມາດຕາ 23 ການຖອນໃບອະນຸຍາດດຳເນີນກິດຈະການ**

ໃບອະນຸຍາດດຳເນີນກິດຈະການ ກ່ຽວກັບພືດປໍແກ້ວ ຈະຖືກຖອນໃນກໍລະນີດັ່ງນີ້:

1. ຜູ້ດຳເນີນກິດຈະການບໍ່ປະຕິບັດຕາມຈຸດປະສົງ ແລະ ເປົ້າໝາຍ ທີ່ໄດ້ຮັບອະນຸຍາດ;
2. ບໍ່ດຳເນີນກິດຈະການຕາມທີ່ໄດ້ຮັບອະນຸຍາດ ຈາກ ຂະແໜງການສາທາລະນະສຸກ ເປັນເວລາ 2 (ສອງ) ປີ;
3. ດຳເນີນກິດຈະການບໍ່ຖືກຕ້ອງສອດຄ່ອງຕາມກົດໝາຍ.

## ໝວດທີ 6
## ການຂຶ້ນທະບຽນ, ຈົດແຈ້ງ ແລະ ຄ່າທຳນຽມ

**ມາດຕາ 24 ການຂຶ້ນທະບຽນ**

ການຂຶ້ນທະບຽນ ແມ່ນການຄຸ້ມຄອງຄຸນນະພາບ, ປະສິດທິພາບ ແລະ ຄວາມປອດໄພ ຂອງຜະລິດຕະພັນ ກ່ອນການຈຳໜ່າຍ, ວິສາຫະກິດ ທີ່ໄດ້ຮັບອະນຸຍາດ ກິດຈະການກ່ຽວກັບພືດປໍ່ແກ້ວ ແມ່ນມີເງື່ອນໄຂ ນຳເອົາຜະລິດຕະພັນມາຂຶ້ນທະບຽນ ຢູ່ ກົມອາຫານ ແລະ ຢາ ໂດຍປະຕິບັດຕາມເງື່ອນໄຂ ຂໍ້ຮຽກຮ້ອງເອກະສານ ຂອງແຕ່ລະຜະລິດຕະພັນທີ່ໄດ້ກຳນົດອອກຕາມຫຼັກວິຊາການໃນການຂຶ້ນທະບຽນ ທີ່ ກະຊວງສາທາລະນະສຸກ ວາງອອກ.

**ມາດຕາ 25 ການຈົດແຈ້ງ**

ການຈົດແຈ້ງແມ່ນ ການຄຸ້ມຄອງຜະລິດຕະພັນທີ່ໄດ້ຈາກພືດປໍ່ແກ້ວ ປະເພດເຄື່ອງສຳອາງ ເຊິ່ງຕ້ອງໄດ້ຮັບການຈົດແຈ້ງ ຕໍ່ ກົມອາຫານ ແລະ ຢາ, ກະຊວງສາທາລະນະສຸກ ຕາມລະບຽບການຈົດແຈ້ງທີ່ທາງການກຳນົດ.

**ມາດຕາ 26 ຄ່າທຳນຽມ**

ຄ່າໃຊ້ຈ່າຍຂອງການບໍລິການ ພິຈາລະນາ ອອກອະນຸຍາດ ກ່ຽວກັບພືດປໍ່ແກ້ວ ແມ່ນອີງຕາມລະບຽບການ ທີ່ ກະຊວງ ສາທາລະນະສຸກ ໄດ້ວາງອອກ ໃນແຕ່ລະໄລຍະ.

## ໝວດທີ 7
## ຂໍ້ຫ້າມ

**ມາດຕາ 27 ຂໍ້ຫ້າມທົ່ວໄປ**

ຫ້າມວິສາຫະກິດ ແລະ ການຈັດຕັ້ງ ມີພຶດຕິກຳດັ່ງນີ້:

1. ສວຍໃຊ້ອຳນາດ, ໜ້າທີ່, ຕຳແໜ່ງ ເພື່ອຫາຜົນປະໂຫຍດ ສ່ວນຕົວ, ໝູ່ເພື່ອນ, ຄອບຄົວ ແລະ ຍາດພີ່ນ້ອງ;
2. ດຳເນີນກິດຈະການ ໂດຍບໍ່ໄດ້ຮັບອະນຸຍາດ ຫຼື ປອມແປງໃບອະນຸຍາດ;
3. ເປັນຊື່ກາງໃນການໃຫ້ ຫຼື ຮັບສິນບົນແກ່ເຈົ້າໜ້າທີ່ທີ່ກ່ຽວຂ້ອງ ເພື່ອໃຫ້ໄດ້ຮັບອະນຸຍາດດຳເນີນກິດຈະການໃດນຶ່ງກ່ຽວກັບ ພືດປໍ່ແກ້ວ;
4. ຂັດຂວາງ, ບໍ່ອຳນວຍຄວາມສະດວກ, ບໍ່ໃຫ້ການຮ່ວມມືໃນການປະຕິບັດໜ້າທີ່ ຂອງເຈົ້າໜ້າທີ່ ແລະ ພະນັກງານທີ່ກ່ຽວຂ້ອງ;
5. ນຳເຂົ້າພືດປໍ່ແກ້ວ ຫຼື ສິ້ນສ່ວນໃດໜຶ່ງ, ຜະລິດຕະພັນສຳເລັດຮູບທີ່ມີສ່ວນປະສົມຈາກພືດປໍ່ແກ້ວທີ່ນຳໃຊ້ທາງການແພດ, ການຄົ້ນຄວ້າ, ວິໄຈຄຸນນະພາບ ແລະ ປິ່ນປົວສ່ວນບຸກຄົນ ໂດຍບໍ່ໄດ້ຮັບອະນຸຍາດ ຈາກ ກະຊວງສາທາລະນະສຸກ;
6. ນຳເຂົ້າ ຜະລິດຕະພັນອາຫານ, ຢາຫຼວງ, ຢາພື້ນເມືອງ, ຜະລິດຕະພັນເສີມສຸຂະພາບ, ເຄື່ອງສຳອາງ ແລະ ນ້ຳມັນທີ່ມີສ່ວນປະສົມຂອງສານ THC ຈາກພືດປໍ່ແກ້ວ ເພື່ອມາບໍລິໂພກ ແລະ ຈໍລະຈອນຈຳໜ່າຍ;
7. ປູກ, ຖອດຖີກ, ຜະລິດ ປຸງແຕ່ງ, ນຳເຂົ້າ-ສົ່ງອອກ, ຂົນສົ່ງ, ຈຳໜ່າຍ, ເກັບຮັກສາ ຫຼື ມີຄອບຄອງ, ຄົ້ນຄ້ວາວິໄຈທາງດ້ານວິທະຍາສາດ ໂດຍບໍ່ໄດ້ຮັບອະນຸຍາດ ຈາກ ກະຊວງສາທາລະນະສຸກ;
8. ມີພຶດຕິກຳອື່ນ ທີ່ເປັນການລະເມີດລະບຽບ ກົດໝາຍ ທີ່ວາງອອກ.

**ມາດຕາ 28 ຂໍ້ຫ້າມສຳລັບຜູ້ດຳເນີນກິດຈະການ**

ຫ້າມ ຜູ້ດຳເນີນກິດຈະການ ມີພຶດຕິກຳ ດັ່ງນີ້:

1. ນຳໃຊ້ໃບອະນຸຍາດ ເກີນຂອບເຂດທີ່ໄດ້ຮັບອະນຸຍາດ, ເຄື່ອນໄຫວຜິດກົດໝາຍ ທີ່ກໍ່ໃຫ້ເກີດຄວາມເສັຍຫາຍຕໍ່ສັງຄົມ ແລະ ປະເທດຊາດ;

2. ໂອນ, ມອບສິດ ໃບອະນຸຍາດທະບຽນວິຊາການ ໃຫ້ ວິສາຫະກິດ ອື່ນເຮັດການເຄື່ອນໄຫວກິດຈະການໃດ ໜຶ່ງກ່ຽວກັບ ພືດປໍແກ້ວ ໂດຍບໍ່ໄດ້ຮັບການເຫັນດີ ແລະ ຮັບຮູ້ ຈາກອົງການຄຸ້ມຄອງພາກລັດຢ່າງເປັນລາຍລັກອັກສອນ;

3. ດັດແປງເນື້ອໃນການອະນຸຍາດ;

4. ມີພຶດຕິກຳອື່ນ ທີ່ເປັນການລະເມີດ ລະບຽບ ກົດໝາຍ ທີ່ວາງອອກ.

**ມາດຕາ 29 ຂໍ້ຫ້າມສຳລັບເຈົ້າໜ້າທີ່ ແລະ ພະນັກງານທີ່ກ່ຽວຂ້ອງຂອງລັດ**

ຫ້າມເຈົ້າໜ້າທີ່ ແລະ ພະນັກງານ ທີ່ກ່ຽວຂ້ອງຂອງລັດ ມີພຶດຕິກຳດັ່ງນີ້:

1. ເປີດເຜີຍຂໍ້ມູນຄວາມລັບ ກ່ຽວກັບກິດຈະການຂອງຜູ້ໃດຜູ້ນຶ່ງ ໂດຍບໍ່ໄດ້ຮັບອະນຸຍາດ;

2. ທວງເອົາ, ຂໍເອົາ, ຮັບເອົາສິນບົນ, ລຳອຽງ, ກົດໜ່ວງຖ່ວງດຶງ, ສົມຮູ້ຮ່ວມຄິດ, ປອມແປງເອກະສານ;

3. ເມີນເສີຍຕໍ່ຄວາມຮັບຜິດຊອບຂອງຕົນ ຫຼື ມີພຶດຕິກຳທີ່ບໍ່ຖືກຕ້ອງ ຕໍ່ຜູ້ດຳເນີນກິດຈະການ;

4. ມີພຶດຕິກຳອື່ນໆ ທີ່ເປັນການລະເມີດ ລະບຽບ ກົດໝາຍ ທີ່ວາງອອກ.

## ໝວດທີ 8
## ໜ້າທີ່ ແລະ ຄວາມຮັບຜິດຊອບ

**ມາດຕາ 30 ໜ້າທີ່ ແລະ ຄວາມຮັບຜິດຊອບລວມ**

ໜ້າທີ່ ແລະ ຄວາມຮັບຜິດຊອບ ໃນການ ຕິດຕາມ, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດກິດຈະການ ຕາມທີ່ໄດ້ຮັບອະນຸຍາດ ເປັນແຕ່ລະໄລຍະ ເປັນຕົ້ນ ການຕິດຕາມ ໄລຍະເລີ່ມຕົ້ນການດຳເນີນງານ, ໄລຍະຂອງການດຳເນີນງານ ແລະ ໄລຍະຂອງການລາຍງານ ດ້ວຍຄວາມເປັນເຈົ້າການ ແລະ ຄວາມຮັບຜິດຊອບຕາມພາລະບົດບາດ ຂອງຕົນ ເພື່ອໃຫ້ການຈັດຕັ້ງປະຕິບັດ ສອດຄ່ອງຕາມລະບຽບກົດໝາຍທີ່ໄດ້ວາງອອກຢ່າງເຂັ້ມງວດ, ຂະແໜງການ ແລະ ພາກສ່ວນທີ່ກ່ຽວຂ້ອງ ຕ້ອງໄດ້ສ້າງກົນໄກການຕິດຕາມ ກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດ ໃຫ້ສອດຄ່ອງຕາມຈຸດປະສົງ ແລະ ເປົ້າໝາຍ ທີ່ໄດ້ຮັບອະນຸຍາດ.

**ມາດຕາ 31 ໜ້າທີ່ ແລະ ຄວາມຮັບຜິດຊອບສະເພາະ**

ກົມອາຫານ ແລະ ຢາ, ກະຊວງສາທາລະນະສຸກ ມີໜ້າທີ່ ແລະ ຄວາມຮັບຜິດຊອບຕົ້ນຕໍດັ່ງນີ້:

1. ເປັນໃຈກາງປະສານສົມທົບກັບບັນດາອະນຸກຳມະການ ຈາກ ຂະແໜງການກ່ຽວຂ້ອງ ໃນການຕິດຕາມກວດກາ ການດຳເນີນການຂອງການຈັດຕັ້ງປະຕິບັດ ຕາມມາດຕະຖານ ແລະ ເງື່ອນໄຂ ເພື່ອໃຫ້ການຈັດຕັ້ງປະຕິບັດ ຢູ່ໃນການຄຸ້ມຄອງຕາມຂອບເຂດທີ່ໄດ້ຮັບອະນຸຍາດ;

2. ປະສານສົມທົບກັບຂະແໜງການ, ເຈົ້າຂອງກິດຈະການ ໃນການທົບທວນຄືນ ກ່ຽວກັບການຕິດຕາມ ກວດກາ ແລະ ປະເມີນຜົນ ເພື່ອການຮັບປະກັນຄຸນນະພາບ;

3. ປະສານສົມທົບ ຂະແໜງການ, ຜູ້ດຳເນີນກິດຈະການ ເພື່ອຮ່ວມກັນໃນການຕິດຕາມ, ກາດກາ ແລະ ປະເມີນຜົນຢ່າງເປັນປົກກະຕິ ໃນແຕ່ລະໄລຍະ;

4. ລາຍງານສະພາບ ແລະ ຄວາມຄືບໜ້າ ຂອງການດຳເນີນ ພາຍຫຼັງໄດ້ຮັບອະນຸຍາດ ໃນແຕ່ລະໄລຍະເປັນປະຈຳ 3 (ສາມ) ເດືອນ, 6 (ຫົກ) ເດືອນ ແລະ 1 (ໜຶ່ງ) ປີ.

**ມາດຕາ 32 ໜ້າທີ່ ແລະ ຄວາມຮັບຜິດຊອບ ຂອງ ຂະແໜງການ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ**

ຂະແໜງການ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ທີ່ໄດ້ຮັບການແຕ່ງຕັ້ງໃນອະນຸກຳມະການ ແມ່ນມີໜ້າທີ່ ແລະ ຄວາມຮັບຜິດຊອບ ໃນການປະສານສົມທົບ ກັບ ກົມອາຫານ ແລະ ຢາ, ກະຊວງສາທາລະນະສຸກ ຕາມຂອບເຂດຄວາມຮັບຜິດຊອບ ແລະ ພາລະບົດບາດ ຂອງຕົນ ເພື່ອດຳນີນການຕິດຕາມ, ກວດກາ ແລະ ປະເມີນຜົນ ໃນແຕ່ລະໄລຍະດັ່ງນີ້:

1. ໄລຍະການຂໍອະນຸຍາດ, ເຊິ່ງຕ້ອງດຳເນີນການກວດກາ ສະຖານທີ່ຕັ້ງ ທີ່ຈະດຳເນີນການຈັດຕັ້ງປະຕິບັດ ໂດຍອີງໃສ່ມີເປົ້າໝາຍ, ລະດັບຄາດໝາຍ, ມາດຕະຖານ ແລະ ຄຸນນະພາບຕາມທີ່ໄດ້ລະບຸໄວ້ໃນການສະເໜີ ແລະ ລະບຸໄວ້ຕາມການໄດ້ຮັບອະນຸຍາດ.

2. ໄລຍະການຈັດຕັ້ງປະຕິບັດ ເຊິ່ງຕ້ອງດຳເນີນການ ຕິດຕາມ, ກວດກາ, ປະເມີນຜົນ, ສະຫຼຸບ ແລະ ລາຍງານຄວາມຄືບໜ້າຜົນຂອງການຈັດຕັ້ງປະຕິບັດ ຕໍ່ຄະນະກຳມະການ ທີ່ໄດ້ສ້າງຕັ້ງຂຶ້ນ, ການຈັດຕັ້ງປະຕິບັດໃຫ້ໄປຕາມແຜນ ທີ່ໄດ້ນຳສະເໜີ ເພື່ອຂໍອະນຸຍາດ ແລະ ຕາມແຜນທີ່ໄດ້ວາງໄວ້.

ໃນແຕ່ລະໄລຍະໃຫ້ລາຍງານຄວາມຄືບໜ້າຂອງການຈັດຕັ້ງປະຕິບັດ ທີ່ໄດ້ລະບຸໄວ້ຕາມການໄດ້ຮັບອະນຸຍາດ ເຊິ່ງຕ້ອງໄດ້ລາຍງານ ຢ່າງເປັນປົກກະຕິ ເຊັ່ນ: ໄລຍະ 3 (ສາມ) ເດືອນ, 6 (ຫົກ) ເດືອນ ແລະ 1 (ໜຶ່ງ) ປີ.

**ມາດຕາ 33 ຄວາມຮັບຜິດຊອບຂອງຜູ້ດຳເນີນກິດຈະການ**

ຜູ້ດຳເນີນກິດຈະການກ່ຽວກັບ ພືດປໍ່ແກ້ວ ແມ່ນຕ້ອງມີຄວາມຮັບຜິດຊອບຕິດຕາມ, ກວດກາ, ປະເມີນ, ສະຫຼຸບ ແລະ ລາຍງານ ຄວາມຄືບໜ້າ ແລະ ຜົນຂອງການຈັດຕັ້ງປະຕິບັດ ໂຄງການ ຕາມການໄດ້ຮັບອະນຸຍາດຢ່າງເປັນປົກກະຕິ ເຊິ່ງຕ້ອງລາຍງານເປັນໄລຍະ 1 (ໜຶ່ງ) ເດືອນ, 3 (ສາມ) ເດືອນ, (6) ຫົກ ເດືອນ ແລະ (1) ໜຶ່ງ ປີ ຕໍ່ນຶ່ງກິດຈະການ ມາຍັງກົມອາຫານ ແລະ ຢາ, ກະຊວງສາທາລະນະສຸກ.

## ໝວດທີ 9
## ນະໂຍບາຍຕໍ່ຜູ້ທີ່ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 34 ນະໂຍບາຍຕໍ່ຜູ້ທີ່ມີຜົນງານ**

ວິສາຫະກິດ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການປະກອບປະຕິບັດຕາມຂໍ້ຕົກລົງສະບັບນີ້ ເປັນຕົ້ນການຊຸກຍູ້ສົ່ງເສີມການດຳເນີນກິດຈະການກ່ຽວກັບ ພືດປໍ່ແກ້ວ ເພື່ອນຳໃຊ້ທາງການແພດ ແລະ ເປັນສິນຄ້າຈາກຜະລິດຕະພັນການແພດ ໄດ້ຢ່າງມີປະສິດທິຜົນສູງ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍຕາມລະບຽບການ.

**ມາດຕາ 35 ມາດຕະການຕໍ່ຜູ້ລະເມີດ**

ວິສາຫະກິດ ຫຼື ການຈັດຕັ້ງທີ່ລະເມີດຕໍ່ຂໍ້ຕົກລົງສະບັບນີ້ ຈະຖືກປະຕິບັດມາດຕະການ ສຶກສາອົບຮົມ, ຍຶດ ອາຍັດ ທຳລາຍ, ລົງວິໄນ, ປັບໄໝ, ໃຊ້ແທນຄ່າເສັຍຫາຍ ຫຼື ດຳເນີນຄະດີອາຍາ ຕາມກໍລະນີເບົາ ຫຼື ໜັກໃນການປະຕິບັດມາດຕະການຕາມລະບຽບການກົດໝາຍດັ່ງນີ້:

1. ມາດຕະການຕໍ່ວິສາຫະກິດການປູກ, ຖອດຮີດ, ຜະລິດ, ປຸງແຕ່ງ, ເກັບຮັກສາ, ຈຳໜ່າຍ, ນຳເຂົ້າ-ສົ່ງອອກ, ຂົນສົ່ງວັດຖຸດິບຈາກພືດປໍ່ແກ້ວ;

ສຶກສາອົບຮົມ, ກ່າວເຕືອນ, ເຮັດບົດບັນທຶກ, ຍຶດອາຍັດ ແລະ ທຳລາຍ ໂດຍການປະສານສົມທົບກັບຂະແໜງການ ທີ່ກ່ຽວຂ້ອງ ໃນການປະຕິບັດມາດຕະການຕາມລະບຽບການກົດໝາຍວ່າດ້ວຍຢາເສບຕິດ;

2. ມາດຕະການ ຕໍ່ວິສາຫະກິດການເກັບຮັກສາ, ຈຳໜ່າຍ, ນຳເຂົ້າ-ສົ່ງອອກ, ຂົນສົ່ງຜະລິດຕະພັນຈາກພືດປໍ່ແກ້ວ

ຄັ້ງທີ 01 ສຶກສາອົບຮົມ, ກ່າວເຕືອນ, ອາຍັດ-ຍຶດຜະລິດຕະພັນ ແລະ ປັບໄໝ 4 ເທົ່າຕົວຂອງມູນຄ່າສິນຄ້າ;

ຄັ້ງທີ 02 ອາຍັດ-ຍຶດຜະລິດຕະພັນ ແລະ ປັບໄໝ 6 ເທົ່າຕົວຂອງມູນຄ່າສິນຄ້າ, ປະກອບສຳນວນຟ້ອງສານ;

ຄັ້ງທີ 03 ອາຍັດ-ຍຶດຜະລິດຕະພັນ ແລະ ປັບໄໝ 8 ເທົ່າຕົວຂອງມູນຄ່າສິນຄ້າ, ປະກອບສຳນວນຟ້ອງສານ.

## ໝວດທີ 10
## ບົດບັນຍັດສຸດທ້າຍ

**ມາດຕາ 36 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມອາຫານ ແລະ ຢາ ເປັນເຈົ້າການຮັບຜິດຊອບການຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ໂດຍ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຢ່າງເຂັ້ມງວດ.

**ມາດຕາ 37 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ພາຍຫຼັງ 30 ວັນ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ລັດຖະມົນຕີ**

ປອ.ດຣ. ບຸນແຝງ ພູມມະໄລສິດ